ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 0970/ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 04 ເມສາ 2023

ໜັງສືແຈ້ງເຊີນ

ຮຽນ: ທ່ານຜູ້ຖືຮຸ້ນ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2022

- ອີງຕາມມະຕິຕົກລົງ ຂອງ ກອງປະຊຸມສະພາບໍລິຫານສະໄໝວິສາມັນຄັ້ງທີ 1/2023 ຂອງ ບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ, ວັນທີ 09 ກຸມພາ 2023.
- ອີງຕາມມະຕິຕົກລົງ ຂອງ ກອງປະຊຸມສະພາບໍລິຫານສະໄໝສາມັນຄັ້ງທີ 1/2023 ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ວັນທີ 20 ມີນາ 2023.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("**ບໍລິສັດ**") ຂໍຖືເປັນກຽດແຈ້ງໃຫ້ທ່ານຊາບວ່າ ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ຈະໄດ້ຈັດຂຶ້ນເປັນ 02 ລະບົບຄື: ລະບົບແບບຊ້ອງໜ້າ ທີ່ຫ້ອງປະຊຸມຊັ້ນ 01 ສຳນັກງານໃຫຍ່ລັດວິສາຫະ ກິດໄຟຟ້າລາວ ແລະ ລະບົບແບບອອນລາຍ. ແລະ ຂໍຖືເປັນກຽດຮຽນເຊີນທ່ານເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳ ປີ 2022 ໃນວັນທີ **25 ເມສາ 2023** ເວລາ **15:00** ໂມງ. ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມແບບອອນລາຍ (ລາຍ ລະອຽດໃນເອກະສານຄັດຕິດທີ 7) ແລະ ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າປະຊຸມແບບຊ້ອງໜ້າແມ່ນ (ເລີ່ມລົງທະບຽນເວລາ **13:30** ໂມງ), ທີ່ຫ້ອງປະຊຸມຊັ້ນ 1, ອາຄານສຳນັກງານໃຫຍ່ ຂອງລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ. ບໍລິສັດໄດ້ແຈ້ງວັນ, ເວລາ ແລະ ວາລະກອງປະຊຸມສາມັນ ຜູ້ຖືຮຸ້ນປະຈຳປີ 2022 ຜ່ານເວັບໄຊທ໌ຂອງບໍລິສັດ (www.edlgen.com.la) ແລະ ລະບົບຂໍ້ມູນຂ່າວສານຂອງຕະຫຼາດ ຫຼັກຊັບລາວ (www.lsx.com.la).

ກຳນົດວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນ ໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022, ໃນວັນທີ **10 ມີນາ 2023**, ຊຶ່ງໄດ້ເປີດເຜີຍໃຫ້ບັນດາທ່ານຊາບແລ້ວ.

ຫວັງວ່າທ່ານຄົງສະຫຼະເວລາອັນມີຄ່າ ເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

ດ້ວຍຄວາມນັບຖືເປັນຢ່າງສູງ,

ຮອງປະທານສະພາບໍລິຫານ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ຈັນທະບູນ ສຸກອາລຸນ

ຖະໜົນມິດຕະພາບລາວ-ໄທ, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

<u>ເອກະສານຄັດຕິດ:</u>

1. ວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2022.
2. ບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2023.
3. ລາຍງານການເງິນປະຈຳປີ 2022.
4. ຊີວະປະຫວັດຫຍໍ້ ຂອງຄະນະສະພາບໍລິຫານຜູ້ໃໝ່.
5. ໃບມອບສັນທະ.
6. ເອກະສານ ແລະ ຫຼັກຖານທີ່ຜູ້ເຂົ້າຮ່ວມກອງປະຊຸມຕ້ອງໃຊ້ເພື່ອການສະເໜີໂຕໃນການເຂົ້າຮ່ວມກອງປະຊຸມ, ການມອບໝາຍ, ການລົງທະບຽນ ແລະ ການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນ.
7. ຄຳແນະນຳຂັ້ນຕອນການເຂົ້າກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ຜ່ານລະບົບອອນລາຍ ແລະ ໃຫ້ລົງທະບຽນພາຍໃນວັນທີ 21 ເມສາ 2023.
8. ແຜນທີ່ຂອງສະຖານທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2022.

<u>ໝາຍເຫດ</u>:

1. ເພື່ອເປັນການອຳນວຍຄວາມສະດວກໃຫ້ກັບບັນດາທ່ານຜູ້ຖືຮຸ້ນ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ຂໍແຈ້ງມາຍັງບັນດາທ່ານຊາບຄື:

1.1 ຜູ້ຖືຮຸ້ນທຸກໆທ່ານ ສາມາດດາວໂຫຼດເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດໃນເວັບໄຊທ໌ ຂອງບໍລິສັດ ແລະ ເວັບໄຊທ໌ ຂອງຕະຫຼາດຫຼັກຊັບລາວ ຫຼື ໄປຮັບເອົາໜັງສືເຊີນພ້ອມເອກະສານຄັດຕິດຢູ່ຕະຫຼາດຫຼັກຊັບລາວ ຊັ້ນ 4 ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ, ບ້ານໂພນທັນເໜືອ, ຖະໜົນ T4, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ. ໂທລະສັບ +85621 454361-4. ເລີ່ມແຕ່ວັນທີ **04 ເມສາ 2023.**

1.2 ຜູ້ຖືຮຸ້ນທີ່ມີຈຸດປະສົງຈະເຂົ້າຮ່ວມກອງປະຊຸມຜ່ານລະບົບອອນລາຍສາມາດສົ່ງຄຳຖາມທີ່ຕິດພັນກັບວາລະກອງປະຊຸມມາກ່ອນບໍ່ໃຫ້ເກີນວັນທີ **21 ເມສາ 2023** ຜ່ານອີເມວ: agm-egm@edlgen.com.la ແລະ ບໍລິສັດຂໍແຈ້ງໃຫ້ຜູ້ຖືຮຸ້ນທີ່ປະຊຸມຜ່ານລະບົບອອນລາຍນັ້ນຊາບວ່າ ບໍ່ໄດ້ສິດໃຫ້ຕັ້ງຄຳຖາມໃນເວລາທີ່ດຳເນີນກອງປະຊຸມ.

1.3 ສະເໜີຜູ້ຖືຮຸ້ນມອບໝາຍໃຫ້ກຳມະການອິດສະຫຼະ ຂອງບໍລິສັດ ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສັນທະຕາມ **<u>ເອກະສານຄັດຕິດ 5</u>** ທີ່ໄດ້ຄັດຕິດມາພ້ອມນີ້ໃຫ້ຖືກຕ້ອງຄົບຖ້ວນ ແລະ ໝາຍ (✔) ເພື່ອເລືອກເອົາກຳມະການສະພາບໍລິຫານອິດສະຫຼະ ຂອງບໍລິສັດທ່ານໃດໜຶ່ງເປັນຜູ້ຕາງໜ້າ ແລະ ສົ່ງໃບມອບສັນທະດັ່ງກ່າວ ພ້ອມເອກະສານປະກອບມາທາງທີ່ຢູ່ອີເມລຂອງບໍລິສັດ: proxy-register@edlgen.com.la ຫຼື ໄປສະນີເຖິງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນຊັ້ນ 07, **ພະແນກ ເລຂານຸການ ບໍລິສັດ**, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ.2392. ແລະ **ກະລຸນາສົ່ງກ່ອນວັນທີ 25 ເມສາ 2023**.

2. ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງກະລຸນານຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຄົນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມ.

3. ສຳລັບຜູ້ຕາງໜ້າທີ່ຈະເຂົ້າຮ່ວມປະຊຸມຈະຕ້ອງນຳເອກະສານ ຫຼື ຫຼັກຖານ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມ ຕາມລາຍລະອຽດທີ່ໄດ້ລະບຸໄວ້ໃນ **<u>ເອກະສານຄັດຕິດ 6</u>** ທີ່ໄດ້ຄັດຕິດມາພ້ອມນີ້ ແລະ ສົ່ງມອບໃຫ້ປະທານໃນກອງປະຊຸມ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກປະທານ, ຜູ້ຕາງໜ້າຈຶ່ງເຂົ້າຮ່ວມກອງປະຊຸມໄດ້.

4. ຖ້າຫາກທ່ານມີຂໍ້ສົງໄສ ຫຼື ຄຳຖາມກ່ຽວກັບການມອບສັນທະ, ທ່ານສາມາດສອບຖາມ ທ່ານ ພຸດທະສອນ ອິນທະປັນຍາ ໂທ: (856-20) 29 898989 ແລະ ທ່ານ ນາງ ສຸພາພອນ ພົງພິລາ (856-20) 5222 8338ໃນໂມງລັດຖະການ.

ວາລະທີ 1. ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນຄັ້ງຜ່ານມາ.

<u>ລາຍລະອຽດ:</u>

ລາຍງານຜົນການຈັດຕັ້ງປະຕິບັດ ມະຕິກອງປະຊຸມຜູ້ຖືຮຸ້ນຄັ້ງຜ່ານມາ ເພື່ອໃຫ້ຜູ້ຖືຮຸ້ນຮັບຊາບເຖິງ ຜົນສຳເລັດ ການຈັດຕັ້ງປະຕິບັດມະຕິກອງປະຊຸມດັ່ງກ່າວ.

I. ກອງປະຊຸມສາມັນວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2023

1. ກ່ຽວກັບວາລະທີ 1 ແລະ 2 ແມ່ນໄດ້ຈັດຕັ້ງປະຕິບັດຕາມການເຫັນດີ ຂອງປະຊຸມວິສາມັນຜູ້ຖືຮຸ້ນແລ້ວ.

<u>ຄຳເຫັນຂອງສະພາບໍລິຫານ:</u>

ລາຍງານການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນຄັ້ງຜ່ານມາ ແມ່ນລາຍງານໃຫ້ຜູ້ຖືຮຸ້ນຮັບຊາບເທົ່ານັ້ນ, ໂດຍວາລະນີ້ແມ່ນບໍ່ມີການລົງຄະແນນສຽງ.

ວາລະທີ 2. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2023.

<u>ລາຍລະອຽດ:</u>

ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2023 ໄດ້ຈັດຂຶ້ນໃນວັນທີ **30 ມັງກອນ 2023**, ຊຶ່ງ ບໍລິສັດໄດ້ມີການບັນທຶກກອງປະຊຸມດັ່ງກ່າວ ມີລາຍລະອຽດໃນ **ເອກະສານຄັດຕິດ 2** ທີ່ໄດ້ຄັດຕິດມາພ້ອມນີ້.

<u>ຄຳເຫັນຂອງສະພາບໍລິຫານ:</u>

ບົດບັນທຶກກອງປະຊຸມ ມີຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2023, ວັນທີ 30 ມັງກອນ 2023.

<u>ຄະແນນສຽງທີ່ຕ້ອງໃຊ້:</u>

ກົດໝາຍວ່າດ້ວຍວິສາຫະກິດ ໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫລາຍກວ່າ ເຄິ່ງໜຶ່ງ ຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 3. ພິຈາລະນາ ແລະ ອະນຸມັດລາຍງານການເງິນ 6 ເດືອນຕົ້ນປີ 2022 ແລະ ການບໍ່ຈ່າຍເງິນປັນຜົນຈາກ ການດຳເນີນທຸລະກິດ 6 ເດືອນຕົ້ນປີ 2022.

ການເຄື່ອນໄຫວທຸລະກິດ ຂອງບໍລິສັດໃນ 6 ເດືອນຕົ້ນປີ 2022 ບໍລິສັດຂາດທຶນເປັນຈຳນວນ 99,71 ຕື້ກີບ ອີງຕາມເອກະສານລາຍງານການເງິນແບບລວມ, ຊຶ່ງຜູ້ກວດສອບພາຍນອກໄດ້ມີການທົບທວນແລ້ວ ແລະ ບໍລິສັດໄດ້ເປີດເຜີຍລາຍງານດັ່ງກ່າວໃນເວັບໄຊທ໌ ຂອງ ຕະຫລາດຫລັກຊັບລາວ ແລະ ເວັບໄຊທ໌ຂອງບໍລິສັດ. ບໍລິສັດບໍ່ ອະນຸມັດຈ່າຍເງິນປັນຜົນ 6 ເດືອນຕົ້ນປີ 2022 ໃຫ້ຜູ້ຖືຮຸ້ນ ເນື່ອງຈາກວ່າບໍລິສັດບໍ່ມີກຳໄລໃນຊ່ວງການດຳເນີນທຸລະກິດ ດັ່ງກ່າວ.

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາ ອະນຸມັດເອົາລາຍງານການເງິນ 6 ເດືອນຕົ້ນປີ 2022 ແລະ ບໍ່ອະນຸມັດການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2022.

ຄະແນນສຽງທີ່ຕ້ອງໃຊ້:

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫລາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 4: ພິຈາລະນາ ແລະ ອະນຸມັດບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2022 ລວມທັງລາຍງານການເງິນຂອງບໍລິສັດ ປີ 2022, ແຜນການດຳເນີນທຸລະກິດຂອງບໍລິສັດປີ 2023.

ລາຍລະອຽດ:

I. ລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປີ 2022

ການດຳເນີນທຸລະກິດຂອງ ຜ-ຟຟລ ໃນປີ 2022 ແມ່ນໄດ້ຜະລິດກະແສໄຟຟ້າຂາຍຍົກໃຫ້ ລັດວິສາຫະກິດໄຟຟ້າລາວ (ຟຟລ) ຕາມສັນຍາຊື້-ຂາຍໄຟຟ້າ (PPA) ແລະ ດຳເນີນການຕາມກົດໝາຍແລະກົດລະບຽບຕ່າງໆ ຂອງ ບໍລິສັດມະຫາຊົນ ທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ. ຜ-ຟຟລ ມີທຶນຈົດທະບຽນ ຈຳນວນ 6.717,21 ຕື້ກີບ ແລະ ມີ ຮຸ້ນສາມັນ ເທົ່າກັບ 1.679.303.697 ຮຸ້ນ. ຜົນການດຳເນີນທຸລະກິດໃນປີ 2022 ສາມາດສັງລວມໄດ້ດັ່ງນີ້:

1. ກຳລັງຕິດຕັ້ງ ແລະ ການຜະລິດ

ກຳລັງຕິດຕັ້ງທັງໝົດມີ 1.776,22 MW, ໃນນີ້ລວມມີ ເຂື່ອນໄຟຟ້າພະລັງງານນ້ຳຢູ່ໃນການຄຸ້ມຄອງ ຈຳນວນ 10 ເຂື່ອນ ລວມກຳລັງຕິດຕັ້ງ 699 MW, ການເຂົ້າຖືຮຸ້ນໃນເຂື່ອນໄຟຟ້າພະລັງງານນ້ຳ ຂອງຜູ້ຜະລິດໄຟຟ້າ ເອກະລາດ ຈຳນວນ 18 ເຂື່ອນ ລວມກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ ຈຳນວນ 1.077,22 MW.

ໃນປີ 2022, ເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ ສາມາດຜະລິດພະລັງງານໄຟຟ້າໄດ້ເທົ່າກັບ **2.796,30 GWh**. ການຜະລິດຈາກເຂື່ອນຜູ້ຜະລິດໄຟຟ້າເອກະລາດ ທີ່ ຜ-ຟຟລ ເຂົ້າຖືຮຸ້ນ ສາມາດຜະລິດໄດ້ **4.833,27 GWh** ຕາມສັດສ່ວນຖືຮຸ້ນ. ດັ່ງນັ້ນ, ໃນປີ 2022 ຜ-ຟຟລ ສາມາດຜະລິດພະລັງງານໄຟຟ້າ ໄດ້ທັງໝົດ **7.629,57 GWh.**

2. ລາຍຮັບ ແລະ ລາຍຈ່າຍ.

ດ້ານລາຍຮັບ: ລາຍຮັບ ຂອງ ຜ-ຟຟລ ປະກອບດ້ວຍ ລາຍຮັບຈາກການຂາຍກະແສໄຟຟ້າ ໃຫ້ແກ່ ຟຟລ, ກຳໄລຈາກການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນບັນດາໂຄງການເຂື່ອນໄຟຟ້າຜູ້ຜະລິດໄຟຟ້າ ເອກະລາດ (IPPs) ແລະ ລາຍຮັບອື່ນໆ ໂດຍມີລາຍລະອຽດດັ່ງນີ້:

- ລາຍຮັບຈາກການຂາຍກະແສໄຟຟ້າ ໃຫ້ແກ່ ຟຟລ ລວມເປັນເງິນ **1.267,35** ຕື້ກີບ.
- ກຳໄລ ຈາກການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ ຈຳນວນ **1.439,31** ຕື້ກີບ.
- ລາຍຮັບອື່ນໆ ລວມເປັນເງິນ **4.027,33** ຕື້ກີບ.

ດັ່ງນັ້ນ, ຕົວເລກລາຍຮັບ ລວມທັງໝົດ ເທົ່າກັບ **6.733,99** ຕື້ກີບ.

ດ້ານລາຍຈ່າຍ: ລາຍຈ່າຍໃນການດຳເນີນທຸລະກິດ ປະກອບດ້ວຍ: ລາຍຈ່າຍຕົ້ນທຶນການຂາຍ, ລາຍ ຈ່າຍການດຳເນີນງານ, ຂາດທຶນຈາກອັດຕາແລກປ່ຽນ, ລາຍຈ່າຍທາງການເງິນ ແລະ ອາກອນກຳໄລ, ໂດຍມີລາຍລະອຽດ ດັ່ງນີ້:

- ລາຍຈ່າຍຕົ້ນທຶນການຂາຍ ຈຳນວນ **632,99** ຕື້ກີບ.
- ລາຍຈ່າຍການດຳເນີນງານ ຈຳນວນ **210,12** ຕື້ກີບ
- ຂາດທຶນຈາກອັດຕາແລກປ່ຽນ ຈຳນວນ **2.623,35** ຕື້ກີບ
- ລາຍຈ່າຍທາງການເງິນ ຈຳນວນ **1.049,07** ຕື້ກີບ
- ລາຍຈ່າຍອາກອນກຳໄລ ຈຳນວນ **80,45** ຕື້ກີບ

ດັ່ງນັ້ນ, ຕົວເລກລາຍຈ່າຍ ລວມທັງໝົດ ເທົ່າກັບ **4.595,98** ຕື້ກີບ.

3. ກຳໄລ

ໃນປີ 2022 ຜ-ຟຟລ ມີລາຍຮັບລວມທັງໝົດ **6.733,99** ຕື້ກີບ ແລະ ລາຍຈ່າຍລວມ **4.595,98** ຕື້ກີບ, ເຮັດໃຫ້ມີກຳໄລສຸດທິ ເທົ່າກັບ **2.138,01** ຕື້ກີບ.

4. ການປະຕິບັດພັນທະ ຕໍ່ລັດຖະບານ.

ຜ-ຟຟລ ໄດ້ປະຕິບັດການມອບພັນທະໃຫ້ແກ່ ລັດຖະບານ ຢ່າງເປັນປົກກະຕິ ແລະທັນເວລາ. ການມອບພັນທັນໃຫ້ແກ່ລັດຖະບານ ປະຈຳປີ 2022 ລວມມີ ຄ່າພາກຫຼວງ 1% ຂອງລາຍຮັບຈາກການຂາຍກະແສໄຟຟ້າ, ອາກອນກຳໄລ 10%, ອາກອນມູນຄ່າເພີ່ມ, ອາກອນລາຍໄດ້ຂອງບຸກຄົນ ລວມເປັນເງິນທັງໝົດ **29,48** ຕື້ກີບ.

5. ດ້ານບຸກຄະລາກອນ ແລະ ການພັດທະນາຊັບພະຍາກອນມະນຸດ.

ຜ-ຟຟລ ປະກອບມີຈຳນວນບຸກຄະລາກອນ ຢູ່ໃນການຄຸ້ມຄອງ ທັງໝົດ **803** ຄົນ, ຍິງ **139** ຄົນ. ໂດຍອີງຕາມວິໄສທັດ ແລະ ນະໂຍບາຍ ຕໍ່ກັບວຽກງານພັດທະນາບຸກຄະລາກອນ, ການຍົກລະດັບ ທາງດ້ານວິຊາສະເພາະ ແລະ ການຝຶກອົບຮົມທັງພາຍໃນ ແລະ ຕ່າງປະເທດ ລວມທັງໝົດ **339** ຄົນ.

6. ກິດຈະກຳວຽກງານສິ່ງແວດລ້ອມ-ສັງຄົມ.

❖ **ວຽກງານດ້ານສິ່ງແວດລ້ອມ**

ໄດ້ຈັດພິທີມອບ-ຮັບເງິນ ຄ່າຊົດເຊີຍຜົນກະທົບ ໃຫ້ຜູ້ທີ່ຖືກຜົນກະທົບ ຈາກໂຄງການເຂື່ອນໄຟຟ້ານ້ຳຄານ 3, ສຳເລັດການສະໜອງງົບປະມານ ແລະ ເບ້ຍໄມ້ ໃຫ້ແກ່ປະຊາຊົນໃນເຂດເຂື່ອນໄຟຟ້ານ້ຳຄານ 2 ແລະ ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ ເພື່ອສົ່ງເສີມຄວາມອຸດົມສົມບູນຂອງປ່າໄມ້ ແລະ ປູກຕົ້ນໄມ້ທົດແທນໃນພື້ນທີ່ ທີ່ຖືກນ້ຳຖ້ວມ ໃນຊ່ວງໄລຍະການກໍ່ສ້າງໃນເຂດອ່າງຮັບນ້ຳຂອງໂຄງການ ແລະ ສະໜອງງົບປະມານໃນການຈັດຕັ້ງປະຕິບັດວຽກງານ ປັກຫຼັກໝາຍ ແລະ ວັດແທກຂອບເຂດຫ້ອງການ, ເຮືອນຈັກ, ປ່າປ້ອງກັນ ແລະ ເຂດສະຫງວນ ເພື່ອຂຶ້ນໃບທະບຽນ ຕອນດິນ ຂອງເຂື່ອນໄຟຟ້ານ້ຳຄານ 3.

ໃນປີ 2022, ຜ-ຟຟລ ໄດ້ໃຊ້ງົບປະມານ **ຈຳນວນ 6.386 ລ້ານກີບ** ເຂົ້າໃນວຽກງານດ້ານສິ່ງແວດລ້ອມ.

❖ **ວຽກງານດ້ານສັງຄົມ**

ໄດ້ຈັດກິດຈະກຳການປູກຈິດສຳນຶກຮ່ວມກັບປະຊາຊົນທີ່ອາໄສໃນເຂດບ້ານອ້ອມຂ້າງ ເພື່ອສົ່ງເສີມຄວາມຮູ້ ກ່ຽວກັບ ການຜະລິດໄຟຟ້າພະລັງງານນ້ຳ ແລະ ຄວາມສຳຄັນໃນການປົກປັກຮັກສາປ່າໄມ້-ແຫຼ່ງນ້ຳ ທີ່ເຂດເຂື່ອນນ້ຳໄຟຟ້າເຊເສັດ 3 ແລະ ໄດ້ມີການບຳລຸງຮັກສາ, ສ້ອມແປງ ແລະ ປັບປຸງສວນສາທິດ ພ້ອມທັງສວນກ້າເບ້ຍໄມ້ ຂອງເຂື່ອນໄຟຟ້ານ້ຳມັງ 3.

ໃນປີ 2022, ຜ-ຟຟລ ໄດ້ໃຊ້ງົບປະມານ **ຈຳນວນ 155 ລ້ານກີບ** ເຂົ້າໃນວຽກງານດ້ານສັງຄົມ.

7. ການລະດົມທຶນ.

ໃນປີ 2022 ຜ່ານການໄດ້ຮັບອະນຸມັດຕາມຂັ້ນຕອນ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ, ຜ-ຟຟລ ສາມາດສຳເລັດການລະດົມທຶນຜ່ານການອອກຈຳໜ່າຍຮຸ້ນກູ້ ໃນວັນທີ 08/07/2022 ຈຳນວນ 972,4 ລ້ານບາດ ເຊິ່ງ ຈຸດປະສົງຂອງການລະດົມທຶນຄັ້ງນີ້ ແມ່ນເພື່ອນຳມາຊຳລະຄືນ (Refinancing) ຮຸ້ນກູ້ທີ່ອອກຈຳໜ່າຍໃນປີ 2019 ທີ່ຄົບກຳນົດຊຳລະດັ່ງກ່າວ.

III. <u>ແຜນການດຳເນີນທຸລະກິດຂອງບໍລິສັດປີ 2023</u>

1. <u>ການຜະລິດ</u>

<u>ກຳລັງການຜະລິດ:</u>

- ເຂື່ອນໄຟຟ້າທີ່ຂຶ້ນກັບ ຜ-ຟຟລ ຈຳນວນ 13 ແຫ່ງ ລວມກຳລັງຕິດຕັ້ງ **944 MW**
- ເຂື່ອນໄຟຟ້າທີ່ ຜ-ຟຟລ ເຂົ້າຖືຮຸ້ນ ຈຳນວນ 19 ແຫ່ງ ລວມກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ **1.127,02 MW**

ລວມກຳລັງຕິດຕັ້ງທັງໝົດ 2.071,02 MW

- **<u>ແຜນການຜະລິດພະລັງງານໄຟຟ້າ:</u>**

- ຕົວເລກແຜນການຜະລິດ ຈາກເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ ເທົ່າກັບ 3.294,90 GWh.
- ຕົວເລກແຜນການຜະລິດ ຈາກເຂື່ອນຜູ້ຜະລິດໄຟຟ້າເອກະລາດທີ່ ຜ-ຟຟລ ເຂົ້າຖືຮຸ້ນ ເທົ່າກັບ 5.582,95 GWh ຕາມສັດສ່ວນຖືຮຸ້ນ.

ລວມຕົວເລກແຜນການຜະລິດພະລັງງານໄຟຟ້າ ໃນປີ 2023 ທັງໝົດເທົ່າກັບ 8.877,85 GWh

2. <u>ການຈຳໜ່າຍພະລັງງານໄຟຟ້າ.</u>

- ແຜນການຈຳໜ່າຍຈາກເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ ເທົ່າກັບ **3.239,86 GWh**.
- ແຜນການຈຳໜ່າຍ ຈາກເຂື່ອນຜູ້ຜະລິດໄຟຟ້າເອກະລາດທີ່ ຜ-ຟຟລ ເຂົ້າຖືຮຸ້ນ ເທົ່າກັບ **5.581,35 GWh** ໂດຍອີງຕາມສັດສ່ວນການຖືຮຸ້ນ.

ລວມຕົວເລກແຜນການຈຳໜ່າຍພະລັງງານໄຟຟ້າ ໃນປີ 2023 ທັງໝົດເທົ່າກັບ 8.821,21 GWh

3. ການລົງທຶນເຂົ້າໃນການຂະຫຍາຍກຳລັງຕິດຕັ້ງ

ໃນປີ 2023, ຜ-ຟຟລ ຈະສືບຕໍ່ລົງທຶນໃນໂຄງການຕ່າງໆ ໂດຍສະເພາະບັນດາເຂື່ອນທີ່ໄດ້ລະບຸໄວ້ໃນໜັງສືຊວນຊື້ຂອງ ຜ-ຟຟລ ລວມທັງໂຄງການໃໝ່ອື່ນໆ ເຊັ່ນ:

➢ **ຮຸ້ນໃນໂຄງການເຂື່ອນ IPPs ທີ່ລົງທຶນໂດຍກົງ**

1. ເຂື່ອນໄຟຟ້ານ້ຳພູນ ກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 51% 23 MW.
2. ເຂື່ອນໄຟຟ້ານ້ຳດິກ 1 ກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 70% 10,5 MW.

4. ການມອບພັນທະໃຫ້ລັດ

ຜ-ຟຟລ ມີພັນທະໃຫ້ລັດ ປະກອບດ້ວຍ ຄ່າພາກຫຼວງ 1% ຂອງລາຍຮັບຈາກການຈຳໜ່າຍກະແສໄຟຟ້າ, ອາກອນມູນຄ່າເພີ່ມ 7%, ອາກອນກຳໄລ ແລະ ອາກອນລາຍໄດ້ຂອງບຸກຄົນ.

5. ການພັດທະນາຊັບພະຍາກອນມະນຸດ

ໂດຍແນໃສ່ການສ້າງບຸກຄະລາກອນ ຂອງ ຜ-ຟຟລ ໃຫ້ເປັນມືອາຊີບ, ສາມາດປະຕິບັດວຽກງານໄດ້ຢ່າງຄ່ອງຕົວ ແລະ ມີປະສິດທິພາບສູງ ເພື່ອສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການ ຂອງການດຳເນີນທຸລະກິດໃນອະນາຄົດ, ບໍລິສັດໄດ້ເອົາໃຈໃສ່ ວາງແຜນໄລຍະສັ້ນ ແລະ ໄລຍະຍາວ ເພື່ອຍົກລະດັບຄວາມຮູ້ຄວາມສາມາດໃຫ້ແກ່ພະນັກງານກຳມະກອນ ຢ່າງເປັນລະບົບ, ໂດຍສະເພາະ ຄວາມຮູ້ພື້ນຖານໃນການປະຕິບັດລະບຽບການ, ການຍົກສູງວິຊາສະເພາະທາງດ້ານເຕັກນິກວິຊາການ. ໃນປີ 2023, ຜ-ຟຟລ ຈະໄດ້ສືບຕໍ່ສ້າງວິຊາການຊຳນານງານ, ຍົກລະດັບຄວາມຮູ້ຄວາມສາມາດຂອງພະນັກງານ ແລະ ຝຶກອົບຮົມດ້ານການດຳເນີນທຸລະກິດການເງິນ, ບັນດາຂໍ້ກຳນົດ ແລະ ກົດລະບຽບຂອງວຽກງານຕະຫຼາດຫຼັກຊັບ. ແຜນພັດທະນາບຸກຄະລາກອນຂອງ ຜ-ຟຟລ ໄດ້ກວມເອົາດ້ານການບໍລິຫານ, ດ້ານການເງິນ ແລະ ເຕັກນິກວິຊາການຕ່າງໆ ໂດຍມີແຜນຈັດສົ່ງເຂົ້າຝຶກອົບຮົມ ທີ່ສູນຝຶກ ຟຟລ ແລະ ສະຖາບັນການສຶກສາທັງພາຍໃນ ແລະ ຕ່າງປະເທດ.

6. ວຽກງານສິ່ງແວດລ້ອມ ແລະ ສັງຄົມ

ເພື່ອເຮັດໃຫ້ການດຳເນີນທຸລະກິດຜະລິດພະລັງງານໄຟຟ້າ ໃນການສືບຕໍ່ປະກອບສ່ວນໃຫ້ມີການພັດທະນາ ແລະ ຄວາມຍືນຍົງ ຕໍ່ກັບສັງຄົມ ແລະ ທຳມະຊາດສິ່ງແວດລ້ອມບໍລິເວນເຂື່ອນ, ໃນປີ 2023 ຜ-ຟຟລ ມີແຜນຈັດຕັ້ງວຽກງານສິ່ງແວດລ້ອມ-ສັງຄົມ ໂດຍແບ່ງອອກເປັນ 2 ພາກສ່ວນ ຄື: (1) ການປະຕິບັດພັນທະຕາມສັນຍາສຳປະທານເຊັ່ນ: ວຽກງານຄຸ້ມຄອງອ່າງໂຕ່ງ, ວຽກງານຄຸ້ມຄອງສິ່ງແວດລ້ອມອ້ອມຂ້າງເຂື່ອນ ແລະ ຄຸ້ມຄອງຄຸນນະພາບນ້ຳ; (2) ການປະກອບສ່ວນຕໍ່ສັງຄົມ ແລະ ພັດທະນາຊຸມຊົນອ້ອມຂ້າງເຂື່ອນ ໂດຍການມີສ່ວນຮ່ວມຂອງຊຸມຊົນ ແລະ ອຳນາດການປົກຄອງທ້ອງຖິ່ນ.

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາອະນຸມັດເອົາບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2022 ລວມທັງລາຍງານການເງິນຂອງບໍລິສັດ ປີ 2022, ແຜນການດຳເນີນທຸລະກິດຂອງບໍລິສັດປີ 2023.

<u>ຄະແນນສຽງທີ່ຕ້ອງໃຊ້:</u>

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 5. ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ປະຈຳປີ 2022, ການກຳນົດວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນທີ່ຈະໄດ້ຮັບເງິນປັນຜົນຈາກຜົນການດຳເນີນທຸລະກິດ ຂອງ ບໍລິສັດ ແລະ ການກຳນົດວັນທີຈ່າຍເງິນປັນຜົນ.

<u>ລາຍລະອຽດ:</u>

ອີງຕາມກົດລະບຽບຂອງບໍລິສັດ, ບໍລິສັດມີນະໂຍບາຍໃນການແບ່ງເງິນປັນຜົນໃນອັດຕາສ່ວນບໍ່ຫຼຸດ 50 ສ່ວນຮ້ອຍຂອງກຳໄລສຸດທິ, ພາຍຫລັງຫັກສ້າງເປັນຄັງສຳຮອງຕາມລະບຽບການ ແລະ ຄັງສຳຮອງອື່ນໆ (ຖ້າມີ) ໃນແຕ່ລະປີ, ຊຶ່ງການແບ່ງເງິນປັນຜົນຈະຂຶ້ນຢູ່ກັບສະພາບເສດຖະກິດ ແລະ ແຜນການລົງທຶນຕ່າງໆໃນອະນາຄົດ.

ສະເໜີກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2022 ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ ໃນວັນທີ **26 ເມສາ 2023** ໃນອັດຕາຮຸ້ນລະ **50** ກີບ, ລວມເປັນເງິນປັນຜົນຈ່າຍທັງໝົດ **83,96** ຕື້ກີບ ແລະ ກຳນົດຈ່າຍເງິນປັນຜົນໃນວັນທີ **24 ພຶດສະພາ 2023**.

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ປະຈຳປີ 2022, ການກຳນົດວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນທີ່ຈະໄດ້ຮັບເງິນປັນຜົນຈາກຜົນການດຳເນີນທຸລະກິດ ຂອງ ບໍລິສັດ ແລະ ການກຳນົດວັນທີຈ່າຍເງິນປັນຜົນດັ່ງກ່າວ.

<u>ຄະແນນສຽງທີ່ຕ້ອງໃຊ້:</u>

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 6. ພິຈາລະນາ ແລະ ອະນຸມັດການເພີ່ມຕົວຄູນດັດສະນີເງິນເດືອນພື້ນຖານ ຂອງພະນັກງານ ໃນສົກປີ 2023.

ລາຍລະອຽດ:

ໂດຍອີງໃສ່ການເໜັ່ງຕີງທາງດ້ານເສດຖະກິດ ອັດຕາເງິນເຟີ້ ແລະ ເພື່ອຮັບປະກັນທາງດ້ານຊີວິດຄວາມເປັນຢູ່ຂອງພະນັກງານ-ກຳມະກອນ, ເຮັດໃຫ້ອົງກອນມີການພັດທະນາທີ່ດີຂຶ້ນ ສາມາດແຂ່ງຂັນກັບບໍລິສັດຮ່ວມທຶນ ແລະ ເອກະຊົນອື່ນໆ ແລະ ເພື່ອເປັນການສ້າງຂວັນກຳລັງໃຈໃຫ້ພະນັກງານທີ່ໄດ້ປະກອບສ່ວນເຂົ້າໃນການດຳເນີນທຸລະກິດ ຂອງບໍລິສັດຢ່າງເຕັມສ່ວນ. ສະເໜີກອງປະຊຸມພິຈາລະນາເພີ່ມຕົວຄູນດັດສະນີເງິນເດືອນພື້ນຖານຂຶ້ນຕື່ມ 12 ສ່ວນຮ້ອຍ ໃນສົກປີ 2023, ໂດຍເລີ່ມປະຕິບັດໃນເດືອນຖັດມາ ພາຍຫຼັງໄດ້ຮັບການອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນ.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາອະນຸມັດການເພີ່ມຕົວຄູນດັດສະນີເງິນເດືອນພື້ນຖານ ຂອງພະນັກງານ ຜ-ຟຟລ ຕາມທີ່ສະເໜີຂ້າງເທິງ.

ຄະແນນສຽງທີ່ຕ້ອງໃຊ້:

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 7. ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງປະທານສະພາບໍລິຫານ, ກຳມະການສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າ, ການແຕ່ງຕັ້ງຮອງປະທານສະພາບໍລິຫານ, ກຳມະການສະພາບໍລິຫານບາງທ່ານທີ່ຄົບອາຍຸການ, ການແຕ່ງຕັ້ງກຳມະການສະພາບໍລິຫານເພີ່ມ ແລະ ການກຳນົດອາຍຸການຂອງບັນດາກຳມະການສະພາບໍລິຫານບໍລິສັດ.

ລາຍລະອຽດ:

ອີງຕາມບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2020, ຄັ້ງວັນທີ 24/07/2020 ວາລະທີ 3 ແລະ ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020, ຄັ້ງວັນທີ 9/04/2021 ວາລະທີ 6.

ອີງຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ ແລະ ບາງທ່ານກໍຖືກແຕ່ງຕັ້ງໄປຮັບໜ້າທີ່ວຽກງານໃໝ່ມາຮອດປັດຈຸບັນເຫັນວ່າອາຍຸການຂອງຮອງປະທານສະພາບໍລິຫານ ແລະ ກຳມະການສະພາບໍລິຫານບາງທ່ານໄດ້ຄົບອາຍຸການແລ້ວ.

ສະເໜີພິຈາລະນາແຕ່ງຕັ້ງປະທານສະພາບໍລິຫານ ແລະ ກຳມະການບາງທ່ານຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າທີ່ໄປຮັບໜ້າທີ່ໃໝ່, ແຕ່ງຕັ້ງຮອງປະທານສະພາບໍລິຫານ ແລະ ກຳມະການບາງທ່ານ ທີ່ປະຕິບັດວຽກງານຄົບອາລະແລ້ວສືບຕໍ່ປະຕິບັດວຽກງານອີກອາລະໜຶ່ງ ແລະ ແຕ່ງຕັ້ງກຳມະການສະພາບໍລິຫານເພີ່ມ 01 ທ່ານ, ຊີວະປະຫວັດຫຍໍ້ຂອງບັນດາສະພາບໍລິຫານແຕ່ລະທ່ານໄດ້ມີລາຍລະອຽດໃນເອກະສານຄັດຕິດ ທີ່ໄດ້ຄັດຕິດມາພ້ອມກັບໜັງສືແຈ້ງເຊີນ, ມີລາຍຊື່ດັ່ງນີ້:

1. **ທ່ານ ສຸລິວັດ ສຸວັນນະຈຸມຄຳ** ຫົວໜ້າກົມຄຸ້ມຄອງໜີ້ສິນສາທາລະນະ, ກະຊວງການເງິນ, ເປັນປະທານສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າທີ່ໄປຮັບໜ້າທີ່ໃໝ່;
2. **ທ່ານ ຈັນທະບຸນ ສຸກອາລຸນ** ຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ ເປັນຮອງປະທານສະພາບໍລິຫານ ສືບຕໍ່ອີກອາລະໜຶ່ງ;
3. **ທ່ານ ປະສົມພັດ ຄຳຕັນ** ຮອງຫົວໜ້າກົມປະຕິຮູບລັດວິສາຫະກິດ ແລະ ການປະກັນໄພ , ເປັນກຳມະການສະພາບໍລິຫານ ເພື່ອປ່ຽນແທນຜູ້ເກົ່າ ທີ່ໄປຮັບໜ້າທີ່ໃໝ່;

4. **ທ່ານ ພົງສະຫວັດ ເສນາພອນ** ປະທານສະພາບໍລິຫານບໍລິສັດ ພົງຊັບທະວີກໍ່ສ້າງ ຂົວທາງ ຈຳກັດຜູ້ດຽວ ເປັນ ກຳມະການສະພາບໍລິຫານ ສືບຕໍ່ອີກວາລະໜຶ່ງ;
5. **ທ່ານ ສົມລັດ ເມກອາກາດ** ຜູ້ອຳນວຍການບໍລິສັດ ພົງຊັບທະວີກໍ່ສ້າງ ຂົວທາງ ຈຳກັດຜູ້ດຽວ ເປັນກຳມະການສະພາ ບໍລິຫານ ສືບຕໍ່ອີກວາລະໜຶ່ງ;
6. **ທ່ານ ສຸກສະຫວາດ ໂສສຸພັນ** ຮອງຜູ້ອຳນວຍການໃຫຍ່ລັດວິສາຫະກິດໄຟຟ້າລາວ ເປັນກຳມະການສະພາບໍລິຫານ ຜູ້ໃໝ່.

ສະເໜີກຳນົດລາຍຊື່ຜູ້ອຳນວຍການ ທີ່ມີອຳນາດລົງລາຍເຊັນຜູກພັນບໍລິສັດ ດັ່ງນີ້:

1. ປະທານສະພາບໍລິຫານ ຫລື ຮອງປະທານສະພາບໍລິຫານ ຫລື ຜູ້ອຳນວຍການໃຫຍ່ ເປັນຜູ້ ລົງລາຍເຊັນ ແລະ ປະທັບກາບໍລິສັດແຕ່ພຽງຜູ້ດຽວ; ຫລື
2. ໃຫ້ຜູ້ອຳນວຍການອື່ນສອງທ່ານ ລົງລາຍເຊັນຮ່ວມກັນ ແລະ ປະທັບກາບໍລິສັດ.

ແລະ ກຳນົດອາຍຸການຂອງກຳມະການສະພາບໍລິຫານທັງໝົດບໍ່ເກີນສອງປີ ໂດຍເລີ່ມນັບແຕ່ມື້ກອງປະ ຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ເປັນຕົ້ນໄປ.

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງເອົາການແຕ່ງຕັ້ງ ປະທານສະພາບໍລິຫານ, ກຳມະການສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າ, ການແຕ່ງຕັ້ງຮອງປະທານສະພາບໍລິຫານ, ກຳມະການສະພາບໍລິຫານບາງທ່ານທີ່ຄົບອາຍຸການ, ການແຕ່ງຕັ້ງກຳມະການສະພາບໍລິຫານເພີ່ມ ແລະ ການກຳນົດອາຍຸ ການຂອງບັນດາກຳມະການສະພາບໍລິຫານບໍລິສັດ ລວມທັງການມອບອຳນາດດັ່ງກ່າວ.

<u>ຄະແນນສຽງທີ່ຕ້ອງໃຊ້:</u>

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຫລາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 8: ພິຈາລະນາ ແລະ ຮັບຮອງການດັດແກ້ກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍກຳມະການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ.

<u>ລາຍລະອຽດ:</u>

ເນື່ອງຈາກມີການປ່ຽນແປງຄະນະສະພາບໍລິຫານ ຂອງບໍລິສັດ ແລະ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງບໍລິຫານ ຂອງບໍລິສັດ ດຳເນີນການໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ ກ່ຽວຂ້ອງ, ສະເໜີກອງປະຊຸມພິຈາລະນາຮັບຮອງການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ມາດຕາ 9 ວ່າດ້ວຍ ກຳມະການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ; ລາຍລະອຽດມີດັ່ງນີ້:

1) **<u>ດັດແກ້ມາດຕາ 9 ວ່າດ້ວຍກຳມະການ:</u>** ປ່ຽນຊື່ ແລະ ຂໍ້ມູນຂອງສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນ ແທນສະພາບໍລິຫານຜູ້ເກົ່າຄື:

ກ. ຜູ້ຖືຮຸ້ນເປັນກຳມະການ:

1. ຊື່ ແລະ ນາມສະກຸນ: ທ່ານ ສຸລິວັດ ສຸວັນນະຈຸມຄຳ
   - ສັນຊາດ: ລາວ;
   - ທີ່ຢູ່ປະຈຸບັນ: ເຮືອນເລກທີ 185, ໜ່ວຍ 12, ບ້ານ ໂພນສະຫວັນໃຕ້, ເມືອງ ສີສັດຕະນາກ, ແຂວງ ນະຄອນຫຼວງວຽງຈັນ.

2. ຊື່ ແລະ ນາມສະກຸນ: ທ່ານ ປະສົມເພັດ ຄຳຕັນ

- ສັນຊາດ: ລາວ;
- ທີ່ຢູ່ປະຈຸບັນ: ເຮືອນເລກທີ 110, ໜ່ວຍ 07, ບ້ານ ວັດນາກ, ເມືອງ ສີສັດຕະນາກ, ແຂວງ ນະຄອນຫຼວງວຽງຈັນ.

3. ຊື່ ແລະ ນາມສະກຸນ: ທ່ານ ສຸກສະຫວາດ ໂສສຸພັນ

- ສັນຊາດ: ລາວ;
- ທີ່ຢູ່ປະຈຸບັນ: ໜ່ວຍ 59, ບ້ານ ເມືອງນ້ອຍ, ເມືອງ ໄຊເສດຖາ ແຂວງ ນະຄອນຫຼວງວຽງຈັນ.

2) **<u>ດັດແກ້ມາດຕາ 12 ວ່າດ້ວຍສະພາບໍລິຫານ:</u>** ຂໍ້ມູນຂອງສະພາບໍລິຫານຜູ້ໃໝ່ຄື:

1. ປະທານສະພາບໍລິຫານ ຊື່ ແລະ ນາມສະກຸນ: ທ່ານ ສຸລິວັດ ສຸວັນນະຈຸມຄຳ
2. ຮອງປະທານສະພາບໍລິຫານ ຊື່ ແລະ ນາມສະກຸນ: ທ່ານ ຈັນທະບູນ ສຸກອາລຸນ

ສະພາບໍລິຫານ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ປັດຈຸບັນທັງໝົດມີ 12 ທ່ານ.

ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ແລະ/ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ໃນເລື່ອງດັ່ງກ່າວຂ້າງເທິງ ລວມທັງມີອຳນາດດັດແກ້ເນື້ອໃນກົດລະບຽບຂອງບໍລິສັດຕາມທີ່ເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ/ຫຼື ເຈົ້າໜ້າທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວມີຄຳແນະນຳ ແລະ/ຫຼືຄຳສັ່ງໃຫ້ດັດແກ້.

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງການດັດແກ້ ກົດລະບຽບບໍລິສັດ ມາດຕາ 09 ແລະ ມາດຕາ 12 ລວມທັງການມອບອຳນາດດັ່ງກ່າວ.

<u>ຄະແນນສຽງທີ່ຕ້ອງໃຊ້:</u>

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຂອງຜູ້ຖືຮຸ້ນ ຫລື ຜູ້ຕາງໜ້າຜູ້ຖືຮຸ້ນຢ່າງໜ້ອຍ ສອງສ່ວນສາມ (2/3) ຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະມີຮຸ້ນລວມກັນຢ່າງໜ້ອຍ 80 ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປີ 2023

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
ກອງປະຊຸມວິສາມັນຜູ້ຖືຮຸ້ນ

ນະຄອນຫຼວງວຽງຈັນ, ວັນທີ 13/02/2023

ບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປີ 2023
ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ປະຊຸມເມື່ອວັນທີ 30 ມັງກອນ 2023 ເວລາ 15:00 ໂມງ ທີ່ຫ້ອງປະຊຸມໃຫຍ່ຊັ້ນ 1, ສຳນັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂດຍ ທ່ານ ຈັນທະບູນ ສຸກອາລຸນ ຮອງປະທານສະພາບໍລິຫານ ບໍລິສັດ ເປັນປະທານກອງປະຊຸມ ຕາມໃບມອບສິດ ສະບັບເລກທີ: 0291/ຜ-ຝຟລ, ລົງວັນທີ: 26/01/2023; ເນື່ອງຈາກທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ ປະທານສະພາບໍລິຫານຕິດພາລະກິດບໍ່ສາມາດເຂົ້າຮ່ວມກອງປະຊຸມໄດ້, ຈຶ່ງໄດ້ມອບສິດໃຫ້ທ່ານຮອງປະທານສະພາບໍລິຫານດຳເນີນການເປັນປະທານກອງປະຊຸມແທນ. ກອງປະຊຸມມີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມດ້ວຍຕົນເອງຈຳນວນ 31 ທ່ານ ແລະ ມອບສັນທະຈຳນວນ 101 ທ່ານ, ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ 132 ທ່ານ ຖືຮຸ້ນລວມກັນທັງໝົດ 1.523.355.938 ຮຸ້ນ ເທົ່າກັບ 90,71 ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ, ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ລະບຽບການ ຂອງ ບໍລິສັດ.

ປະທານກອງປະຊຸມ ໄດ້ແນະນຳກຳມະການສະພາບໍລິຫານແຕ່ລະທ່ານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງທີ່ເຂົ້າຮ່ວມປະຊຸມ ດັ່ງນີ້:

1. **ທ່ານ ຈັນທະບູນ ສຸກອາລຸນ** ຕຳແໜ່ງ: ຮອງປະທານສະພາບໍລິຫານ/ຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ;
2. **ທ່ານ ວັນແສງ ວັນນະວົງ** ຕຳແໜ່ງ: ກຳມະການສະພາບໍລິຫານ/ຮັກສາການຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ;
3. **ທ່ານ ສົມພິດ ແກ້ວວິຈິດ** ຕຳແໜ່ງ: ກຳມະການສະພາບໍລິຫານ/ຫົວໜ້າກົມທຸລະກິດພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່;
4. **ທ່ານ ສົມລັດ ເມກອາກາດ** ຕຳແໜ່ງ: ກຳມະການສະພາບໍລິຫານ/ຜູ້ອຳນວຍການ ບໍລິສັດຝັງຊັບທະວີກໍ່ສ້າງຂົວທາງ, ເຄຫາສະຖານ ແລະ ຊົນລະປະທານ ຈຳກັດ;
5. **ທ່ານ ຊົນລະວິດ ວິນິດໄສ** ຕຳແໜ່ງ: ກຳມະການສະພາບໍລິຫານ/ຜູ້ອຳນວຍການບໍລິສັດ ຣາຊ໌ລາວ ບໍລິການຈຳກັດ;
6. **ທ່ານ ຄຳມຸນ ວິພົງໄຊ** ຕຳແໜ່ງ: ກຳມະການສະພາບໍລິຫານອິດສະຫຼະ/ອາດີດຮອງລັດຖະມົນຕີກະຊວງພາຍໃນ; (ເຂົ້າຮ່ວມກອງປະຊຸມທາງອອນລາຍ)
7. **ທ່ານ ປອ. ພັນປະກິດ ອ່ອນພັນດາລາ** ຕຳແໜ່ງ: ກຳມະການສະພາບໍລິຫານອິດສະຫຼະ /ຮອງຫົວໜ້າກົມເລຂາ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ.

ໂດຍອີງປະຊຸມມີ 07 ທ່ານ ຂາດປະຊຸມ 04 ທ່ານ ເນື່ອງຈາກຕິດພາລະກິດທາງການບໍ່ສາມາດເຂົ້າຮ່ວມກອງປະຊຸມໄດ້ຄື: **ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ** ຕຳແໜ່ງ: ປະທານສະພາບໍລິຫານ / ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ, **ທ່ານ ພົງສະຫວັດ ເສນາພອນ** ຕຳແໜ່ງ: ກຳມະການສະພາບໍລິຫານ / ປະທານບໍລິສັດພົງຊັບທະວີ ກໍ່ສ້າງຂົວທາງ, ເຄຫາສະຖານ ແລະ ຊົນລະປະທານ ຈຳກັດ, **ທ່ານ ນາງ ມະນີວອນ ພົນອາມາດ** ຕຳແໜ່ງ: ກຳມະການສະພາບໍລິຫານ/ຮອງຫົວໜ້າກົມຄຸ້ມຄອງໜີ້ສິນສາທາລະນະ, ກະຊວງການເງິນ; ແລະ **ທ່ານ ຄຳແກ້ວ ວິສິສົມບັດ** ຕຳແໜ່ງ: ກຳມະການສະພາບໍລິຫານອິດສະຫຼະ/ຫົວໜ້າກົມບໍລິການທະນາຄານ, ທະນາຄານແຫ່ງ ສປປລາວ;

ພ້ອມດຽວກັນນີ້, ກໍຍັງມີ ທ່ານຜູ້ຕາງໜ້າຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຜູ້ຕາງໜ້າຈາກຕະຫຼາດຫຼັກຊັບລາວ, ບັນດາທ່ານຮອງຜູ້ອຳນວຍການໃຫຍ່ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ຄະນະຜູ້ອຳນວຍການຝ່າຍຂອງບໍລິສັດ. ຮອງຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ, ຄະນະກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ, ຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນ ເຂົ້າຮ່ວມກອງປະຊຸມຄັ້ງນີ້.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແມ່ນໄດ້ຈັດກອງປະຊຸມທັງແບບຊ້ອງໜ້າ ແລະ ແບບອອນລາຍ ເພື່ອໃຫ້ຜູ້ຖືຮຸ້ນສາມາດເຂົ້າຮ່ວມໄດ້ຕາມຄວາມສະດວກຂອງແຕ່ລະທ່ານ. ສຳລັບບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມໃນຫ້ອງປະຊຸມແມ່ນໄດ້ໃສ່ຜ້າອັດປາກ ແລະ ນັ່ງເວັ້ນໄລຍະຫ່າງຕາມທີ່ພິທີການໄດ້ກຳນົດໄວ້ ແລະ ໂດຍສະເພາະບັນດາທ່ານຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມແບບອອນລາຍ ແມ່ນໄດ້ປະຕິບັດຕາມຄູ່ມືທີ່ໄດ້ແຈກຢາຍໃຫ້ພ້ອມກັບບັດເຊີນປະຊຸມ.

ຫຼັງຈາກນັ້ນ ປະທານກອງປະຊຸມ ໄດ້ມອບໃຫ້ ທ່ານ ວັນແສງ ວັນນະວົງ ຮັກສາການຜູ້ອຳນວຍການໃຫຍ່ ຂອງ ບໍລິສັດ ອະທິບາຍກ່ຽວກັບວິທີການລົງຄະແນນສຽງໃຫ້ທີ່ປະຊຸມຊາບ ແລະ ລາຍງານແຕ່ລະວາລະຂອງການປະຊຸມ, ຊຶ່ງລາຍລະອຽດມີດັ່ງນີ້:

1. ການລົງຄະແນນສຽງ:

- ທ່ານຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່ ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.
- ໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ ປະທານຈະຖາມກອງປະຊຸມວ່າ ມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ.

ທ່ານປະທານໄດ້ກ່າວໄປແລ້ວໃນເບື້ອງຕົ້ນ ກອງປະຊຸມວິສາມັນຜູ້ຖືຮຸ້ນ ຂອງ ຜ-ຟຟລ ໃນປີນີ້ ແມ່ນຈະມີການຈັດກອງປະຊຸມແບບຊ້ອງໜ້າ ແລະ ແບບອອນລາຍ. ຕໍ່ໄປ ຂ້າພະເຈົ້າຂໍແນະນຳວິທີການລົງຄະແນນໃນແຕ່ລະຮູບແບບການເຂົ້າປະຊຸມ ດັ່ງນີ້:

ທ່ານທີ່ເຂົ້າຮ່ວມກອງປະຊຸມແບບຊ້ອງໜ້າ: ຖ້າຫາກມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ໃຫ້ທ່ານນັ້ນກາເຄື່ອງ ໝາຍໃສ່ຊ່ອງການລົງມະຕິບໍ່ເຫັນດີ ໃນບັດລົງຄະແນນ ທີ່ເຈົ້າໜ້າທີ່ໄດ້ແຈກຢາຍໃຫ້ກ່ອນເຂົ້າປະຊຸມ ແລະ ຍົກບັດທີ່ກາເຄື່ອງໝາຍນັ້ນຂຶ້ນສູງໆ ຈົນກວ່າຈະມີເຈົ້າໜ້າທີ່ມາເກັບບັດລົງຄະແນນ ເພື່ອນຳໄປກວດນັບຄະແນນສຽງໃນວາລະນັ້ນໆ ແລະ ສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກບັດ ຖືວ່າຜູ້ຖືຮຸ້ນທ່ານນັ້ນ ມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ. ຖ້າຫາກບໍ່ມີຜູ້ຖືຮຸ້ນທ່ານໃດຍົກບັດ ໃຫ້ຖືວ່າເຫັນດີ ຕາມເລື່ອງທີ່ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ, ແຕ່ຍົກເວັ້ນກໍລະນີທີ່ຜູ້ຖືຮຸ້ນໄດ້ເຮັດເຄື່ອງໝາຍໃນໃບມອບສັນທະໄວ້ຢ່າງຈະແຈ້ງແລ້ວວ່າ ຈະລົງມະຕິບໍ່ເຫັນດີ, ຊຶ່ງບໍລິສັດໄດ້ບັນທຶກຄະແນນສຽງທີ່ບໍ່ເຫັນດີດັ່ງກ່າວນັ້ນໄວ້ແລ້ວ.

ທ່ານຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມແບບອອນລາຍ: ສາມາດລົງຄະແນນສຽງຜ່ານລະບົບປະຊຸມອອນລາຍ ໂດຍລາຍລະອຽດຂັ້ນຕອນ ແລະ ວິທີການຕ່າງໆ ແມ່ນທ່ານສາມາດເຂົ້າເບິ່ງໄດ້ໃນຄູ່ມືທີ່ໄດ້ຄັດຕິດໃນໜັງສືແຈ້ງເຊີນ ແລະ

ໄດ້ເປີດເຜີຍໃຫ້ຊາບແລ້ວ ແລະ ບັນດາທ່ານຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມແບບອອນລາຍຊາບວ່າ ຄຳຖາມທີ່ບັນດາທ່ານຜູ້ຖືຮຸ້ນໄດ້ສົ່ງມາ ຕາມການແນະນຳທີ່ໄດ້ລະບຸໄວ້ລະອຽດແລ້ວໃນໜັງສືຮຽນເຊີນປະຊຸມຜູ້ຖືຮຸ້ນ ທີ່ໄດ້ເປີດເຜີຍໄປແລ້ວ ແລະ ບໍລິສັດຈະຕອບຄຳຖາມຂອງແຕ່ລະທ່ານໃນບົດບັນທຶກກອງປະຊຸມຜູ້ຖືຮຸ້ນ.

ສຳລັບຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງ ຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຕາມທີ່ຜູ້ຖືຮຸ້ນໄດ້ລະບຸໄວ້ໃນໃບມອບສັນທະນັ້ນ, ບໍລິສັດໄດ້ນຳເອົາການລົງຄະແນນສຽງ ຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສັນທະດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເປັນທີ່ຮຽບຮ້ອຍແລ້ວ ເພື່ອເປັນຄວາມສະດວກໃຫ້ແກ່ຜູ້ຕາງໜ້າ ໂດຍຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງ ໃນບັດລົງຄະແນນໃນກອງປະຊຸມຕື່ມອີກ.

2. ການນັບຜົນການລົງຄະແນນສຽງ

ການນັບຜົນການລົງຄະແນນສຽງໃນແຕ່ລະວາລະ ແມ່ນໄດ້ນັບຄະແນນສຽງຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຄະແນນສຽງຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເຂົ້າຮ່ວມປະຊຸມ ທີ່ອອກສຽງບໍ່ເຫັນດີມາຫັກລົບອອກ ຈາກຈຳນວນຮຸ້ນທັງໝົດ ຂອງຜູ້ທີ່ມາເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ.

ປະທານກອງປະຊຸມຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະ ໃຫ້ກອງປະຊຸມຮັບຊາບ ຫຼັງຈາກການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງ ໂດຍຈະແຍກຄະແນນສຽງເຫັນດີ ແລະ ບໍ່ເຫັນດີວ່າມີຈັກສຽງ ແລະ ເປັນຈຳນວນຈັກສ່ວນຮ້ອຍ, ກໍລະນີມີຜູ້ຖືຮຸ້ນທີ່ສົ່ງບັດລົງຄະແນນບໍ່ເຫັນດີ ພາຍຫຼັງທີ່ປະທານໄດ້ປະກາດໃຫ້ກອງປະຊຸມຮັບຊາບຜົນການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວ ມານັບເປັນຄະແນນສຽງຕື່ມອີກ.

ໂດຍອີງຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ, ໃນກອງປະຊຸມວິສາມັນຜູ້ຖືຮຸ້ນ ຂອງ ບໍລິສັດ ໃນຄັ້ງນີ້ ບໍ່ອະນຸຍາດໃຫ້ຜູ້ສັງເກດການ ມີຄຳຖາມໃນເວລາດຳເນີນການປະຊຸມ, ມີພຽງແຕ່ຜູ້ຖືຮຸ້ນເທົ່ານັ້ນມີສິດຕັ້ງຄຳຖາມ ແລະ ປະກອບຄຳຄິດຄຳເຫັນ ກ່ຽວກັບວາລະການປະຊຸມ.

ຫຼັງຈາກນັ້ນ, ຮັກສາການຜູ້ອຳນວຍການໃຫຍ່ ໄດ້ເລີ່ມເຂົ້າສູ່ວາລະກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2023 ໂດຍໄດ້ລາຍງານເປັນແຕ່ລະວາລະ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

ວາລະທີ 1. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນຄັ້ງທີ 1 ປະຈຳປີ 2022.

ກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ປະຈຳປີ 2022 ໄດ້ຈັດຂຶ້ນໃນວັນທີ 29 ກໍລະກົດ 2022 ທີ່ຜ່ານມາ, ຊຶ່ງບໍລິສັດໄດ້ມີການບັນທຶກກອງປະຊຸມດັ່ງກ່າວມີລາຍລະອຽດໃນ ເອກະສານຄັດຕິດ 2 ທີ່ໄດ້ຄັດຕິດໃນບັດເຊີນ ທີ່ໄດ້ສົ່ງໃຫ້ບັນດາທ່ານຜູ້ຖືຮຸ້ນແລ້ວ. ບົດບັນທຶກກອງປະຊຸມ ມີຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວ ແລະ ສະພາບໍລິຫານໄດ້ເຫັນດີໃຫ້ກອງປະຊຸມວິສາມັນຜູ້ຖືຮຸ້ນ. ພິຈາລະນາຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ປະຈຳປີ 2022.

ຫຼັງຈາກ ຮັກສາການຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 1 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດ ໃຫ້ຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນ ປະທານໄດ້ສະເໜີໃຫ້ກອງປະຊຸມວິສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ປະຈຳປີ 2022 ດັ່ງກ່າວ, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ຮັບຮອງເອົາບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ປະຈຳປີ 2022 ໄດ້ຈັດຂຶ້ນໃນວັນທີ 29 ກໍລະກົດ 2022, ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.523.355.938 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ**

ວາລະທີ 2. ພິຈາລະນາ ແລະ ອະນຸມັດການຊອກຫາແຫຼ່ງທຶນ ໂດຍຜ່ານການອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ.

ຮັກສາການຜູ້ອຳນວຍການໃຫຍ່ ໄດ້ລາຍງານຕໍ່ທີ່ປະຊຸມ ເພື່ອໃຫ້ບໍລິສັດ ສາມາດຊອກຫາແຫຼ່ງທຶນ ເພື່ອຮອງຮັບໃຫ້ແກ່ການຊຳລະໜີ້ສິນເດີມທີ່ຈະຄົບກຳນົດ (Refinance) ໃນລະຫວ່າງປີ 2023-2024 ແລະ ສຳລັບຄ່າໃຊ້ຈ່າຍທົ່ວໄປໃນການດຳເນີນທຸລະກິດຂອງບໍລິສັດ ລວມເຖິງເງິນທຶນໝຸນວຽນຂອງບໍລິສັດ, ດັ່ງນັ້ນ ບໍລິສັດຈຶ່ງເຫັນສົມຄວນສະເໜີກອງປະຊຸມ ພິຈາລະນາອະນຸມັດແຜນການຊອກຫາແຫຼ່ງທຶນ ຜ່ານການອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ, ມີລາຍລະອຽດດັ່ງນີ້:

ຈຳນວນວົງເງິນ:	ຈຳນວນວົງເງິນບໍ່ເກີນ 500 ລ້ານໂດລາສະຫະລັດ ຫຼື ທຽບເທົ່າໃນສະກຸນເງິນອື່ນໆ.
ຈຸດປະສົງ:	ເພື່ອໃຊ້ສຳລັບເປົ້າໝາຍໃດໜຶ່ງ ຫຼື ຫຼາຍຢ່າງລວມກັນ ເຊັ່ນ: ການຊຳລະຄືນໜີ້ສິນເດີມທີ່ຈະຄົບກຳນົດຂອງບໍລິສັດ (Refinance ເງິນກູ້ ແລະ/ຫຼື ຮຸ້ນກູ້ທີ່ອອກຈຳໜ່າຍຜ່ານມາ), ຄ່າໃຊ້ຈ່າຍທົ່ວໄປໃນການເຄື່ອນໄຫວດຳເນີນທຸລະກິດຂອງບໍລິສັດ ລວມເຖິງ ເງິນທຶນໝຸນວຽນຂອງບໍລິສັດ.
ສະກຸນເງິນ:	ສະເໜີອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ກູ້ຢືມເງິນ ດ້ວຍສະກຸນເງິນໃດກໍໄດ້ ລວມທັງ ສະກຸນເງິນກີບລາວ, ບາດໄທ ແລະ/ຫຼື ໂດລາສະຫະລັດ.
ອັດຕາດອກເບ້ຍ:	ອັດຕາດອກເບ້ຍຂຶ້ນຢູ່ກັບຜົນການຈັດລຳດັບຄວາມໜ້າເຊື່ອຖືຂອງບໍລິສັດ ແລະ ສະພາບຕະຫຼາດ ໃນຂະນະທີ່ສະເໜີຂາຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນ ໃນແຕ່ລະຄັ້ງ.
ອາຍຸຂອງຮຸ້ນກູ້ ແລະ ໄລຍະເວລາການກູ້ຢືມເງິນ:	ຕາມແຜນການນຳໃຊ້ທຶນ ແລະ ສະພາບຂອງຕະຫຼາດໃນຊ່ວງໄລຍະເວລາທີ່ສະເໜີອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ໃນຂະນະທີ່ຈະກູ້ຢືມເງິນ ໃນແຕ່ລະຄັ້ງ.
ວິທີການສະເໜີຂາຍ:	ດ້ວຍວິທີການໃດໜຶ່ງ ຫຼື ຫຼາຍວິທີລວມກັນ ເຊັ່ນ: (1) ບໍລິສັດ ສາມາດອອກແລະຈຳໜ່າຍຮຸ້ນກູ້ ທັງໝົດຫຼືບາງສ່ວນ, ໃນຄັ້ງດຽວເຕັມຈຳນວນເງິນ ຫຼື ຫຼາຍຄັ້ງ, ເປັນຊຸດດຽວ ຫຼື ຫຼາຍຊຸດ ຕາມຄວາມຈຳເປັນໃນການໃຊ້ເງິນຂອງບໍລິສັດ ເຊິ່ງອາດຈະສະເໜີອອກຈຳໜ່າຍ ໃນຕະຫຼາດຂອງ ສປປ ລາວ, ຕະ ຫຼາດປະເທດໄທ ຫຼື ຕະຫຼາດສາກົນ ໂດຍຜ່ານຮູບແບບການອອກຈຳໜ່າຍໃຫ້ແກ່ມວນຊົນ ແລະ/ຫຼື ໃນວົງຈຳກັດ, ສະເໜີຈຳໜ່າຍໃຫ້ແກ່ຜູ້ລົງທຶນປະເພດສະຖາບັນ ແລະ/ຫຼື ຜູ້ລົງທຶນລາຍໃຫຍ່ ໂດຍປະຕິບັດຕາມກົດໝາຍ ແລະ ກົດລະບຽບທີ່ກ່ຽວຂ້ອງ ແລະ ມີຜົນບັງຄັບໃຊ້ໃນໄລຍະເວລາທີ່ສະເໜີອອກຈຳໜ່າຍຮຸ້ນກູ້; (2) ການກູ້ຢືມເງິນ ຈາກທະນາຄານຫຼືສະຖາບັນການເງິນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ.

ແລະ ສະເໜີກອງປະຊຸມວິສາມັນຜູ້ຖືຮຸ້ນ ມອບອຳນາດໃຫ້ ສະພາບໍລິຫານຂອງບໍລິສັດ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການພິຈາລະນາ ແລະ ດຳເນີນວຽກງານ ກ່ຽວກັບການອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ, ມີລາຍລະອຽດດັ່ງຕໍ່ໄປນີ້:

(1) ພິຈາລະນາ ແລະ ກຳນົດວົງເງິນ ທີ່ຈະອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມຈາກສະຖາບັນການເງິນ, ລາຍລະອຽດ ທີ່ກ່ຽວຂ້ອງ ເຊັ່ນ ປະເພດຂອງຮຸ້ນກູ້, ເງິນກູ້ຢືມ, ຂໍ້ກຳນົດແລະເງື່ອນໄຂ, ໄລຍະເວລາການກູ້ຢືມຫລືອາຍຸຂອງຮຸ້ນກູ້, ມູນຄ່າການກູ້ຢືມ ແລະ/ຫຼື ມູນຄ່າອອກຈຳໜ່າຍຮຸ້ນກູ້, ອັດຕາດອກເບ້ຍ, ສະກຸນເງິນ, ໄລຍະເວລາໃນການອອກ ແລະ ສະ ເໜີຂາຍ, ວິທີການຈັດສັນ, ວິທີການສະເໜີຂາຍ, ລາຍລະອຽດການສະເໜີຂາຍ;

(2) ການເປີດເຜີຍຂໍ້ມູນ, ຕິດຕໍ່, ການໃຫ້ຂໍ້ຄວາມ, ການໃຫ້ຂໍ້ມູນ, ດັດແກ້, ເພີ່ມເຕີມ, ເຈລະຈາ, ຕົກລົງ, ລົງນາມ, ການ ສົ່ງມອບ ຄຳຮ້ອງຕ່າງໆ, ສັນຍາ ແລະ/ຫຼື ເອກະສານຕ່າງໆ ທີ່ຈຳເປັນ ແລະ ກ່ຽວຂ້ອງ ກັບການອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມຈາກສະຖາບັນການເງິນ ໃຫ້ແກ່ບັນດາໜ່ວຍງານຕ່າງໆ ລວມມີແຕ່ບໍ່ຈຳກັດພຽງ ສຳນັກງານຄະນະ ກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ, ທະນາຄານແຫ່ງ ສປປ ລາວ, ຄະນະກຳມະການກຳກັບຫຼັກຊັບແລະ ຕະຫຼາດຫຼັກຊັບ ປະເທດໄທ, ທະນາຄານແຫ່ງປະເທດໄທ, ສະມາຄົມຕະຫຼາດການສານໜີ້ແຫ່ງປະເທດໄທ, ໜ່ວຍງານ ລັດຖະບານ ແລະ/ຫຼື ອົງການຂອງລັດ ຫຼື ນິຕິບຸກຄົນຫຼືບຸກຄົນໃດ ທີ່ກ່ຽວຂ້ອງ;

(3) ຄັດເລືອກ, ແຕ່ງຕັ້ງ, ຖອດຖອນ ບໍລິສັດທີ່ປຶກສາ, ຜູ້ຈັດຈຳໜ່າຍຫຼັກຊັບ, ຜູ້ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ, ຕົວແທນ, ທີ່ປຶກສາ, ຕົວແທນຜູ້ຖືຮຸ້ນກູ້, ຕົວແທນຜູ້ອອກຮຸ້ນກູ້, ນາຍທະບຽນ ແລະ ຕົວແທນຊຳລະ ແລະ/ຫຼື ບຸກຄົນອື່ນໆ ທີ່ຈຳເປັນໃຫ້ແກ່ການດຳເນີນທຸລະກຳຈົນສຳເລັດ;

(4) ເປີດບັນຊີທະນາຄານ ທີ່ກ່ຽວຂ້ອງກັບທຸລະກຳການອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນ ກັບສະຖາບັນການ ເງິນ ໃນ ສປປ ລາວ, ປະເທດໄທ ຫຼື ປະເທດອື່ນໆ ສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

(5) ປະຕິບັດແລະດຳເນີນວຽກງານອື່ນໆທີ່ຈຳເປັນແລະກ່ຽວຂ້ອງໄດ້ທຸກປະການ ເພື່ອໃຫ້ສຳເລັດທຸລະກຳດັ່ງກ່າວ, ລວມ ທັງໃຫ້ມີອຳນາດໃນການແຕ່ງຕັ້ງ ແລະ/ຫຼື ຖອດຖອນ ຜູ້ຮັບມອບອຳນາດ ໃນການດຳເນີນການໃດໜຶ່ງດັ່ງກ່າວຂ້າງ ເທິງນີ້.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມພິຈາລະນາຮັບຮອງການຊອກຫາແຫຼ່ງທຶນ ເພື່ອ ຮອງຮັບການຊຳລະໜີ້ສິນເດີມ ທີ່ຈະຄົບກຳນົດໃນລະຫວ່າງ ປີ 2023-2024 ແລະ ສຳລັບຄ່າໃຊ້ຈ່າຍທົ່ວໄປໃນການ ດຳເນີນທຸລະກິດ ຂອງບໍລິສັດ ລວມເຖິງເງິນທຶນໝຸນວຽນ ຂອງບໍລິສັດ ໂດຍຜ່ານການອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການ ກູ້ຢືມເງິນຈາກສະຖາບັນການເງິນ ໃນວົງເງິນບໍ່ເກີນ 500 ລ້ານໂດລາສະຫະລັດ ຫຼື ທຽບເທົ່າສະກຸນເງິນອື່ນໆ ລວມທັງ ການມອບອຳນາດດັ່ງກ່າວຂ້າງເທິງ.

ຫຼັງຈາກຜູ້ອຳນວຍການໃຫຍ່ ໄດ້ສະເໜີໂດຍຫຍໍ້ ກ່ຽວກັບວາລະທີ 2 ແລ້ວ, ປະທານກອງປະຊຸມ ໄດ້ເປີດໂອກາດເຊີນ ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້ ແລະ ເນື່ອງຈາກຜູ້ຖືຮຸ້ນບໍ່ມີຄຳເຫັນຕໍ່ວາລະທີ 2 ນີ້.

ປະທານກອງປະຊຸມຈຶ່ງສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດແຜນການຊອກຫາທຶນ ໂດຍຜ່ານການອອກ ຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ ຕາມລາຍລະອຽດ ແລະ ການຂໍອະນຸມັດທີ່ໄດ້ລະບຸໄວ້ຂ້າງເທິງ ດ້ວຍ ຄະແນນສຽງເຫັນດີ (2/3) ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ຖືຮຸ້ນຮ່ວມກັນຫຼາຍກວ່າ 80 ສ່ວນຮ້ອຍ ຂອງຈຳ ນວນຮຸ້ນທີ່ຖືກຖອກແລ້ວທັງໝົດ.

ມະຕິ: ກອງປະຊຸມໄດ້ມີມະຕິອະນຸມັດການຊອກຫາແຫຼ່ງທຶນ ໂດຍຜ່ານການອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນ ຈາກສະຖາບັນການເງິນ ໃນວົງເງິນບໍ່ເກີນຈຳນວນ 500 ລ້ານໂດລາສະຫະລັດ ຫຼື ທຽບເທົ່າໃນສະກຸນເງິນອື່ນໆ, ເພື່ອໃຊ້ສຳລັບການຊຳລະຄືນໜີ້ສິນເດີມທີ່ຈະຄົບກຳນົດຂອງບໍລິສັດ ໃນລະຫວ່າງ ປີ 2023-2024 ແລະ ສຳລັບ ຄ່າໃຊ້ຈ່າຍທົ່ວໄປໃນການດຳເນີນທຸລະກິດ ຂອງບໍລິສັດ ລວມເຖິງເງິນທຶນໝຸນວຽນ ຂອງບໍລິສັດ; ມີລາຍລະອຽດ ດັ່ງຕໍ່ໄປນີ້:

ຈຳນວນວົງເງິນ:	ຈຳນວນວົງເງິນບໍ່ເກີນ 500 ລ້ານໂດລາສະຫະລັດ ຫຼື ທຽບເທົ່າໃນສະກຸນເງິນອື່ນໆ.
ຈຸດປະສົງ:	ເພື່ອໃຊ້ສຳລັບເປົ້າໝາຍໃດໜຶ່ງ ຫຼື ຫຼາຍຢ່າງລວມກັນ ເຊັ່ນ: ການຊຳລະຄືນໜີ້ສິນເດີມທີ່ຈະຄົບກຳນົດຂອງບໍລິສັດ (Refinance ເງິນກູ້ ແລະ/ຫຼື ຮຸ້ນກູ້ທີ່ອອກຈຳໜ່າຍຜ່ານມາ), ຄ່າໃຊ້ຈ່າຍທົ່ວໄປໃນການເຄື່ອນໄຫວດຳເນີນທຸລະກິດຂອງບໍລິສັດ ລວມເຖິງ ເງິນທຶນໝຸນວຽນຂອງບໍລິສັດ.
ສະກຸນເງິນ:	ສະເໜີອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ກູ້ຢືມເງິນ ດ້ວຍສະກຸນເງິນໃດກໍໄດ້ ລວມທັງ ສະກຸນເງິນກີບລາວ, ບາດໄທ ແລະ/ຫຼື ໂດລາສະຫະລັດ.
ອັດຕາດອກເບ້ຍ:	ອັດຕາດອກເບ້ຍຂຶ້ນຢູ່ກັບຜົນການຈັດລຳດັບຄວາມໜ້າເຊື່ອຖືຂອງບໍລິສັດ ແລະ ສະພາບຕະຫຼາດໃນຂະນະທີ່ສະເໜີຂາຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນ ໃນແຕ່ລະຄັ້ງ.
ອາຍຸຂອງຮຸ້ນກູ້ ແລະ ໄລຍະເວລາການກູ້ຢືມເງິນ:	ຕາມແຜນການນຳໃຊ້ທຶນ ແລະ ສະພາບຂອງຕະຫຼາດໃນຊ່ວງໄລຍະເວລາທີ່ສະເໜີອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ໃນຂະນະທີ່ຈະກູ້ຢືມເງິນ ໃນແຕ່ລະຄັ້ງ.
ວິທີການສະເໜີຂາຍ:	ດ້ວຍວິທີການໃດໜຶ່ງ ຫຼື ຫຼາຍວິທີລວມກັນ ເຊັ່ນ: (1) ບໍລິສັດ ສາມາດອອກແລະຈຳໜ່າຍຮຸ້ນກູ້ ທັງໝົດຫຼືບາງສ່ວນ, ໃນຄັ້ງດຽວ ເຕັມຈຳນວນເງິນ ຫຼື ຫຼາຍຄັ້ງ, ເປັນຊຸດດຽວ ຫຼື ຫຼາຍຊຸດ ຕາມຄວາມຈຳເປັນໃນການໃຊ້ເງິນຂອງບໍລິສັດ ເຊິ່ງອາດຈະສະເໜີອອກຈຳໜ່າຍ ໃນຕະຫຼາດຂອງ ສປປ ລາວ, ຕະຫຼາດປະເທດໄທ ຫຼື ຕະຫຼາດສາກົນ ໂດຍຜ່ານຮູບແບບການອອກຈຳໜ່າຍໃຫ້ແກ່ມວນຊົນ ແລະ/ຫຼື ໃນວົງຈຳກັດ, ສະເໜີຈຳໜ່າຍໃຫ້ແກ່ຜູ້ລົງທຶນປະເພດສະຖາບັນ ແລະ/ຫຼື ຜູ້ລົງທຶນລາຍໃຫຍ່ ໂດຍປະຕິບັດຕາມກົດໝາຍ ແລະ ກົດລະບຽບທີ່ກ່ຽວຂ້ອງ ແລະ ມີຜົນບັງຄັບໃຊ້ໃນໄລຍະເວລາທີ່ສະເໜີອອກຈຳໜ່າຍຮຸ້ນກູ້; (2) ການກູ້ຢືມເງິນ ຈາກທະນາຄານຫຼືສະຖາບັນການເງິນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ.

ແລະ ມອບອຳນາດໃຫ້ ສະພາບໍລິຫານຂອງບໍລິສັດ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍ ຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການພິຈາລະນາ ແລະດຳເນີນວຽກງານ ກ່ຽວກັບການອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ, ມີລາຍລະອຽດດັ່ງຕໍ່ໄປນີ້:

(1) ພິຈາລະນາ ແລະ ກຳນົດວົງເງິນ ທີ່ຈະອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມຈາກສະຖາບັນການເງິນ, ລາຍລະອຽດທີ່ກ່ຽວຂ້ອງ ເຊັ່ນ ປະເພດຂອງຮຸ້ນກູ້, ເງິນກູ້ຢືມ, ຂໍ້ກຳນົດ ແລະ ເງື່ອນໄຂ, ໄລຍະເວລາການກູ້ຢືມຫລືອາຍຸຂອງຮຸ້ນກູ້, ມູນຄ່າການກູ້ຢືມ ແລະ/ຫຼື ມູນຄ່າອອກຈຳໜ່າຍຮຸ້ນກູ້, ອັດຕາດອກເບ້ຍ, ສະກຸນເງິນ, ໄລຍະເວລາໃນການອອກ ແລະ ສະເໜີຂາຍ, ວິທີການຈັດສັນ, ວິທີການສະເໜີຂາຍ, ລາຍລະອຽດການສະເໜີຂາຍ;

(2) ການເປີດເຜີຍຂໍ້ມູນ, ຕິດຕໍ່, ການໃຫ້ຂໍ້ຄວາມ, ການໃຫ້ຂໍ້ມູນ, ດັດແກ້, ເພີ່ມເຕີມ, ເຈລະຈາ, ຕົກລົງ, ລົງນາມ, ການສົ່ງມອບ ຄຳຮ້ອງຕ່າງໆ, ສັນຍາ ແລະ/ຫຼື ເອກະສານຕ່າງໆ ທີ່ຈຳເປັນ ແລະ ກ່ຽວຂ້ອງ ກັບການອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມຈາກສະຖາບັນການເງິນ ໃຫ້ແກ່ບັນດາໜ່ວຍງານຕ່າງໆ ລວມມີແຕ່ບໍ່ຈຳກັດພຽງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ, ທະນາຄານແຫ່ງ ສປປ ລາວ, ຄະນະກຳມະການກຳກັບຫຼັກຊັບ ແລະ ຕະຫຼາດຫຼັກຊັບ ປະເທດໄທ, ທະນາຄານແຫ່ງປະເທດໄທ, ສະມາຄົມຕະຫຼາດການສານໜີ້ແຫ່ງປະເທດໄທ, ໜ່ວຍງານລັດຖະບານ ແລະ/ຫຼື ອົງການຂອງລັດ ຫຼື ນິຕິບຸກຄົນຫຼືບຸກຄົນໃດ ທີ່ກ່ຽວຂ້ອງ;

(3) ຄັດເລືອກ, ແຕ່ງຕັ້ງ, ຖອດຖອນ ບໍລິສັດທີ່ປຶກສາ, ຜູ້ຈັດຈຳໜ່າຍຫຼັກຊັບ, ຜູ້ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ, ຕົວແທນ, ທີ່ປຶກສາ, ຕົວແທນຜູ້ຖືຮຸ້ນກູ້, ຕົວແທນຜູ້ອອກຮຸ້ນກູ້, ນາຍທະບຽນ ແລະ ຕົວແທນຊຳລະ ແລະ/ຫຼື ບຸກຄົນອື່ນໆ ທີ່ຈຳເປັນໃຫ້ແກ່ການດຳເນີນທຸລະກຳຈົນສຳເລັດ;

(4) ເປີດບັນຊີທະນາຄານ ທີ່ກ່ຽວຂ້ອງກັບທຸລະກຳການອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນ ກັບສະຖາບັນການເງິນ ໃນ ສປປ ລາວ, ປະເທດໄທ ຫຼື ປະເທດອື່ນໆ ສອດຄ່ອງຕາມກົດໝາຍແລະລະບຽບການທີ່ກ່ຽວຂ້ອງ;

(5) ປະຕິບັດແລະດຳເນີນວຽກງານອື່ນໆທີ່ຈຳເປັນແລະກ່ຽວຂ້ອງໄດ້ທຸກປະການ ເພື່ອໃຫ້ສຳເລັດທຸລະກຳດັ່ງກ່າວ, ລວມທັງໃຫ້ມີອຳນາດໃນການແຕ່ງຕັ້ງ ແລະ/ຫຼື ຖອດຖອນ ຜູ້ຮັບມອບອຳນາດໃນການດຳເນີນການໃດໜຶ່ງດັ່ງກ່າວຂ້າງເທິງນີ້.

ກອງປະຊຸມໄດ້ມີມະຕິດ້ວຍຄະແນນສຽງຫຼາຍກວ່າສອງສ່ວນສາມ (2/3) ຂອງຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ມີຮຸ້ນລວມກັນຫຼາຍກວ່າແປດສິບສ່ວນຮ້ອຍ (80%) ຂອງຈຳນວນຮຸ້ນທີ່ຖອກທັງໝົດດັ່ງນີ້:

(ກ) ຈຳນວນຄົນຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ:

1. **ເຫັນດີ 132 ຄົນ ເທົ່າກັບ 100 ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.**

(ຂ) ຈຳນວນຮຸ້ນ (ສຽງ) ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ:

1. **ເຫັນດີ 1.523.355.938 ຮຸ້ນ (ສຽງ), ເທົ່າກັບ 90,713546 ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດ**

ພາຍຫຼັງທີ່ກອງປະຊຸມໄດ້ພິຈາລະນາທຸກວາລະແລ້ວ, ປະທານກອງປະຊຸມໄດ້ຮັບການສອບຖາມ ແລະ ຂໍ້ສະເໜີຈາກຜູ້ຖືຮຸ້ນດັ່ງນີ້:

<u>ຄຳເຫັນຂອງຜູ້ຖືຮຸ້ນ:</u> **(1) ທ່ານ Kraiwal Kadavanich (ສະມາຄົມຜູ້ຖືຮຸ້ນແຫ່ງປະເທດໄທ):** ວັດຖຸປະສົງທີ່ເປັນເງິນທຶນໝຸນວຽນນີ້ ແມ່ນມີຈຸດປະສົງດຽວກັນກັບເງິນກູ້ທີ່ຈະຄົບກຳນົດ (Refinance)ໃນປີ 2023-2024 ນີ້ແມ່ນບໍ່?

(2) ທ່ານ ວັນແສງ ວັນນະວົງ: ຈຸດປະສົງໃນການນຳໃຊ້ເງິນໃນຄັ້ງນີ້ແມ່ນຕິດພັນກັບການ Refinance ນອກຈາກເປັນການຫົດແທນຄືນເງິນຕົ້ນແລ້ວ ທຸລະກຳໃນການອອກຮຸ້ນກູ້ໃໝ່ຈະມີຄ່າໃຊ້ຈ່າຍໃນການຕິດພັນບໍ່ວ່າຈະເປັນຄ່າດຳເນີນການ, ບັນດາທີ່ປຶກສາຕ່າງໆ ບໍ່ແມ່ນການລະດົມທຶນເພື່ອເປັນການລົງທຶນໃໝ່

(3) ທ່ານ Kraiwal Kadavanich (ສະມາຄົມຜູ້ຖືຮຸ້ນແຫ່ງປະເທດໄທ): ເທົ່າກັບວ່າ ວັດຖຸປະສົງທີ່ລະບຸໃນວາລະນີ້ ຈະລະບຸອອກເປັນສອງສ່ວນຄື: ສ່ວນທີ່ບໍ່ໄດ້ Refinance ຈະບອກວ່າເປັນສຳລັບການດຳເນີນງານທົ່ວໄປ (General Corporate Purposes) ແລະ ລວມໄປເຖິງເງິນທຶນໝຸນວຽນທົ່ວໄປ (Company's working capital) ເຊິ່ງຈະມີ 2 ສ່ວນນີ້ແມ່ນບໍ່ທີ່ນອກເໜືອຈາກການ Refinance. ສ່ວນທີ່ເປັນການ Refinance ແມ່ນຈະຕ້ອງມີຈຸດປະສົງການນຳໃຊ້ເງິນຄືກັບເງິນກູ້ທີ່ຈະຄົບກຳນົດແມ່ນບໍ່? ຂ້າພະເຈົ້າ ເຂົ້າໃຈຖືກຕ້ອງຫຼືບໍ່?

(4) ທ່ານ ວັນແສງ ວັນນະວົງ: ທ່ານເຂົ້າໃຈຖືກແລ້ວ, ຄວາມໝາຍຂອງການ Refinance ແມ່ນເປັນເງິນຕົ້ນທັງໝົດ ພຽງແຕ່ວ່າທຸລະກຳໃນການສັນຫາທຶນຈະມີຄ່າໃຊ້ຈ່າຍອື່ນເຂົ້າມາຕິດພັນພ້ອມ.

ພາຍຫຼັງການສອບຖາມ ແລະ ຊີ້ແຈງ ຂອງຄະນະສະພາບໍລິຫານແລ້ວ, ຖືວ່າໄດ້ພິຈາລະນາຄົບວາລະກອງປະຊຸມແລ້ວ, ແລະ ປະທານໄດ້ສະເໜີທີ່ປະຊຸມເພື່ອປະກອບຄຳຄິດຄຳເຫັນຕື່ມ ແລະ ຊັກຖາມຂໍ້ຂ້ອງໃຈອື່ນໆ ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ໃນຕອນທ້າຍຂອງການປະຊຸມ ປະທານກອງປະຊຸມ ໄດ້ແຈ້ງໃຫ້ທີ່ປະຊຸມຊາບກ່ຽວກັບຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມມີຈຳນວນຜູ້ຖືຮຸ້ນເຂົ້າຮ່ວມປະຊຸມດ້ວຍຕົນເອງມີຈຳນວນ 31 ທ່ານ ແລະ ມີຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນຜູ້ຖືຮຸ້ນຈຳນວນ 101 ທ່ານ ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ 132 ຄົນ ຖືຮຸ້ນລວມກັນ 1.523.355.938 ຮຸ້ນ ເທົ່າກັບ 90,71 ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.

ແລະ ຕໍ່ມາປະທານກອງປະຊຸມ ໄດ້ກ່າວຄຳຂອບໃຈບັນດາທ່ານຜູ້ຖືຮຸ້ນທຸກທ່ານ ທີ່ເຂົ້າຮ່ວມກອງປະຊຸມໃນມື້ນີ້ ແລະ ຂໍອວຍພອນໄຊແດ່ ບັນດາຄະນະຜູ້ບໍລິຫານບໍລິສັດ ຈົ່ງມີສຸຂະພາບເຂັ້ມແຂງ ປະສົບຜົນສຳເລັດໃນໜ້າທີ່ວຽກງານ, ຂໍອວຍພອນໄຊແດ່ ທ່ານ ຜູ້ຖືຮຸ້ນທຸກທ່ານ ແລະ ບັນດາແຂກທີ່ມີກຽດທຸກທ່ານ ຈົ່ງມີສຸຂະພາບເຂັ້ມແຂງ ປະສົບຜົນສຳເລັດໃນໜ້າທີ່ວຽກງານທຸກປະການ.

ກອງປະຊຸມໄດ້ພິຈາລະນາຄົບຖ້ວນຕາມວາລະກອງປະຊຸມແລ້ວ, ບໍ່ມີເລື່ອງໃດທີ່ຈະພິຈາລະນາຕື່ມ, ປະທານກອງປະຊຸມ ໄດ້ກ່າວປິດກອງປະຊຸມເວລາ 15:30 ໂມງ.

ປະທານກອງປະຊຸມ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ຈັນທະບູນ ສຸກອາລຸນ

ຮັບຮອງຖືກຕ້ອງ

ອັນແສງ ອັນມະວິງ

ລາຍງານການເງິນປະຈຳປີ 2022

ໃບລາຍງານຖານະການເງິນແບບລວມ ແລະ ແບບແຍກ
ໃນວັນທີ 31 ທັນວາ 2022

	ບິດ ອະທິບາຍ	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
		31 ທັນວາ 2022	31 ທັນວາ 2021	31 ທັນວາ 2022	31 ທັນວາ 2021
		ລ້ານກີບ	ລ້ານກີບ	ລ້ານກີບ	ລ້ານກີບ
ຊັບສິນ					
ຊັບສິນບໍ່ໝຸນວຽນ					
ເງິນລົງທຶນ ໃນບໍລິສັດລູກ	4	-	-	541.241	619.680
ເງິນລົງທຶນ ໃນວິສາຫະກິດຂາຮຸ້ນ	5.1	6.093.283	5.151.967	6.093.283	5.151.967
ເງິນລົງທຶນ ໃນບໍລິສັດຮຸ້ນສ່ວນ	5.2	3.689.092	3.264.319	3.689.092	3.264.319
ເງິນລົງທຶນທົ່ວໄປ		375.688	375.688	375.688	375.688
ເງິນຈ່າຍລ່ວງໜ້າ ສຳລັບຊັບສິນຢູ່ພາຍໃຕ້ການສຳປະທານ ແລະ ເງິນລົງທຶນ	6, 23	2.000.534	1.973.406	2.012.359	2.002.701
ຊັບສິນຢູ່ພາຍໃຕ້ການສຳປະທານ, ສຸດທິ	7	8.307.936	8.975.510	8.127.898	8.466.878
ຊັບສິນຄົງທີ່ບໍ່ມີຕົວຕົນ, ສຸດທິ		45	-	40	-
ໜີ້ຕ້ອງຮັບຈາກສັນຍາ swap		-	16.131	-	16.131
ເງິນຈ່າຍລ່ວງໜ້າໃຫ້ຜູ້ສະໜອງ-ໂຄງການກໍ່ສ້າງ		341.075	341.075	-	-
ຊັບສິນທີ່ບໍ່ໝຸນວຽນອື່ນໆ		1.719	27.233	1.719	26.862
ລວມຊັບສິນບໍ່ໝຸນວຽນ		**20.809.372**	**20.125.329**	**20.841.320**	**19.924.226**
ຊັບສິນໝຸນວຽນ					
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	8	220.311	202.585	217.779	161.702
ເງິນລົງທຶນໄລຍະສັ້ນ	9	52.005	33.489	52.005	33.489
ເງິນກູ້ຢືມໄລຍະສັ້ນໃຫ້ພາກສ່ວນທີ່ກ່ຽວຂ້ອງ	23	-	337.574	-	337.574
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ	10	684.428	2.221.934	684.341	2.262.874
ອາໄຫຼ່ ແລະ ເຄື່ອງໃນສາງ, ສຸດທິ		1.582	3.771	1.582	3.771
ຊັບສິນໝຸນວຽນອື່ນໆ		7.901.524	3.627.485	7.902.934	3.562.275
ລວມຊັບສິນໝຸນວຽນ		**8.859.850**	**6.426.838**	**8.858.641**	**6.361.685**
ລວມຍອດຊັບສິນ		**29.669.222**	**26.552.167**	**29.699.961**	**26.285.911**

ທ່ານ ອັນແສງ ອັນນະວົງ
ຮັກສາການຜູ້ອຳນວຍການໃຫຍ່
ວັນທີ: 4 ເມສາ 2023

ທ່ານ ຄຳໃບ ທາລວງໄຊ
ຜູ້ອຳນວຍການຝ່າຍການເງິນ
ວັນທີ: 4 ເມສາ 2023

ໃບລາຍງານຖານະການເງິນແບບລວມ ແລະ ແບບແຍກ
ໃນວັນທີ 31 ທັນວາ 2022

	ຍິດ ອະທິບາຍ	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
		31 ທັນວາ 2022	31 ທັນວາ 2021	31 ທັນວາ 2022	31 ທັນວາ 2021
		ລ້ານກີບ	ລ້ານກີບ	ລ້ານກີບ	ລ້ານກີບ
ທຶນ ແລະ ໜີ້ສິນ					
ທຶນ					
ທຶນຈົດທະບຽນ	11	6.717.215	6.717.215	6.717.215	6.717.215
ສ່ວນເພີ່ມມູນຄ່າຮຸ້ນ	11	985.621	985.621	985.621	985.621
ຄ້ຳສະສົມຕາມລະບຽບການ	12	776.685	565.708	776.685	565.708
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ		443.608	134.944	443.608	134.944
ກຳໄລສະສົມ		2.667.088	823.602	2.681.633	866.804
ທຶນທີ່ເປັນສ່ວນບໍລິສັດ		**11.590.217**	**9.227.090**	**11.604.762**	**9.270.292**
ສ່ວນໄດ້ເສຍທີ່ບໍ່ມີອຳນາດການຄວບຄຸມ		(4.649)	3.504	-	-
ລວມທຶນ		**11.585.568**	**9.230.594**	**11.604.762**	**9.270.292**
ໜີ້ສິນ					
ໜີ້ສິນບໍ່ໝຸນວຽນ					
ເງິນກູ້ຢືມໄລຍະຍາວສຸດທິ	13	50.885	3.178.012	50.885	2.945.941
ຮຸ້ນກູ້ສຸດທິ	14	13.475.146	10.751.211	13.475.146	10.751.211
ໜີ້ຕ້ອງສິ່ງຈາກສັນຍາ swap		87.169	-	87.169	-
ລວມໜີ້ສິນບໍ່ໝຸນວຽນ		**13.613.200**	**13.929.223**	**13.613.200**	**13.697.152**
ໜີ້ສິນໝຸນວຽນ					
ໜີ້ຕ້ອງສິ່ງການຄ້າ ແລະ ໜີ້ຕ້ອງສິ່ງອື່ນໆ		503.538	280.424	521.205	233.590
ເງິນກູ້ຢືມໄລຍະຍາວເຖິງກຳນົດຈັດເປັນໄລຍະສັ້ນ	13	128.227	1.669.676	128.227	1.646.699
ເງິນກູ້ຢືມໄລຍະສັ້ນສຸດທິ	13	216.766	106.739	216.766	106.739
ຮຸ້ນກູ້ໄລຍະຍາວເຖິງກຳນົດຈັດເປັນໄລຍະສັ້ນ	14	2.922.856	378.281	2.922.856	378.281
ລາຍຈ່າຍຄ້າງຈ່າຍ	15	697.519	955.765	691.398	951.693
ໜີ້ສິນໝຸນວຽນອື່ນໆ		1.548	1.465	1.547	1.465
ລວມຍອດໜີ້ສິນໝຸນວຽນ		**4.470.454**	**3.392.350**	**4.481.999**	**3.318.467**
ລວມຍອດໜີ້ສິນ		**18.083.654**	**17.321.573**	**18.095.199**	**17.015.619**
ລວມຍອດທຶນ ແລະ ໜີ້ສິນ		**29.669.222**	**26.552.167**	**29.699.961**	**26.285.911**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ທ່ານ ອັນແສງ ອັນມະວິງ
ຮັກສາການຜູ້ອຳນວຍການໃຫຍ່
ວັນທີ: 4 ເມສາ 2023

ທ່ານ ຄຳໃບ ທລວງໄຊ
ຜູ້ອຳນວຍການຝ່າຍການເງິນ
ວັນທີ: 4 ເມສາ 2023

ໃບລາຍງານຜົນໄດ້ຮັບແບບລວມ ແລະ ແບບແຍກ
ສຳລັບປີສິ້ນສຸດ 31 ທັນວາ 2022

	ຍິດ ອະທິບາຍ	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
		31 ທັນວາ 2022	31 ທັນວາ 2021	31 ທັນວາ 2022	31 ທັນວາ 2021
		ລ້ານກີບ	ລ້ານກີບ	ລ້ານກີບ	ລ້ານກີບ
ລາຍຮັບຈາກການຂາຍ		1.267.355	1.196.664	1.260.894	1.168.853
ຕົ້ນທຶນໃນການຂາຍ	16	(632.991)	(585.971)	(628.849)	(570.720)
ກຳໄລຂັ້ນຕົ້ນ		**634.364**	**610.693**	**632.045**	**598.133**
ລາຍຮັບອື່ນໆ	17	4.027.326	55.292	3.960.475	44.111
ລາຍຈ່າຍໃນການດຳເນີນງານ ແລະ ບໍລິຫານ	16	(210.120)	(154.090)	(180.238)	(139.577)
ກຳໄລ (ຂາດທຶນ) ສຸດທິ ຈາກອັດຕາແລກປ່ຽນ		(2.623.348)	(612.913)	(2.615.988)	(614.037)
ກຳໄລ ຂອງຮຸ້ນຈາກເງິນລົງທຶນໃນ ວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	5	1.439.306	960.715	1.439.306	960.715
ກຳໄລກ່ອນລາຍຈ່າຍທາງການເງິນ		**3.267.528**	**859.697**	**3.235.600**	**849.345**
ລາຍຈ່າຍທາງການເງິນ	18	(1.049.068)	(855.815)	(1.045.382)	(842.501)
ກຳໄລກ່ອນອາກອນກຳໄລ		**2.218.460**	**3.882**	**2.190.218**	**6.844**
ລາຍຈ່າຍອາກອນກຳໄລ	19	(80.447)	-	(80.447)	-
ກຳໄລໃນປີ		**2.138.013**	**3.882**	**2.109.771**	**6.844**
ສ່ວນຂອງກຳໄລທີ່ເປັນຂອງ:					
ສ່ວນຂອງບໍລິສັດແມ່		2.138.428	4.392	2.109.771	6.844
ສ່ວນໄດ້ເສຍທີ່ບໍ່ມີອຳນາດການຄວບຄຸມ		(415)	(510)	-	-
		2.138.013	**3.882**	**2.109.771**	**6.844**
ກຳໄລຕໍ່ຮຸ້ນ					
ກຳໄລພື້ນຖານຕໍ່ຮຸ້ນ (ກີບ)	20	1.273,63	2,62	1.256,56	4,08

ທ່ານ ວັນແສງ ວັນມະວົງ
ຮັກສາການຜູ້ອຳນວຍການໃຫຍ່
ວັນທີ: 4 ເມສາ 2023

ທ່ານ ຄຳໃບ ຫລວງໄຊ
ຜູ້ອຳນວຍການຝ່າຍການເງິນ
ວັນທີ: 4 ເມສາ 2023

ບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງຂອງທຶນແບບລວມ
ສຳລັບປີສິ້ນສຸດວັນທີ 31 ທັນວາ 2022

	ເອກະສານລາຍງານການເງິນແບບລວມ							
	ສ່ວນຂອງຜູ້ຖືຮຸ້ນບໍລິສັດ							
	ທຶນ ຈົດທະບຽນ ລ້ານກີບ	ສ່ວນເພີ່ມ ມູນຄ່າຮຸ້ນ ລ້ານກີບ	ຄ້ຳສະສົມຕາມ ລະບຽບການ ລ້ານກີບ	ຜົນຕ່າງຈາກການ ແປງຄ່າເອກະສານ ລາຍງານການເງິນ ລ້ານກີບ	ກຳໄລສະສົມ ຍັງບໍ່ທັນໄດ້ ແບ່ງປັນ ລ້ານກີບ	ລວມ ລ້ານກີບ	ສ່ວນໄດ້ເສຍ ທີ່ບໍ່ມີອຳນາດ ໃນການຄວບຄຸມ ລ້ານກີບ	ລວມ ທຶນຂອງຜູ້ຖືຮຸ້ນ ລ້ານກີບ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2021								
ໃນວັນທີ 1 ມັງກອນ 2021	6.717.215	985.621	565.024	34.022	987.824	9.289.706	4.014	9.293.720
ກຳໄລໃນປີ	-	-	-	-	4.392	4.392	(510)	3.882
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	-	-	-	100.922	-	100.922	-	100.922
ຈ່າຍເງິນປັນຜົນ (ບົດອະທິບາຍ 21)	-	-	-	-	(167.930)	(167.930)	-	(167.930)
ໂອນເຂົ້າຄ້ຳສຳຮອງຕາມລະບຽບການ	-	-	684	-	(684)	-	-	-
ຍອດເຫຼືອໃນວັນທີ 31 ທັນວາ 2021	**6.717.215**	**985.621**	**565.708**	**134.944**	**823.602**	**9.227.090**	**3.504**	**9.230.594**
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2022								
ໃນວັນທີ 1 ມັງກອນ 2022	6.717.215	985.621	565.708	134.944	823.602	9.227.090	3.504	9.230.594
ການສູນເສຍອຳນາດຄວບຄຸມໃນບໍລິສັດລູກ	-	-	-	-	-	-	(7.738)	(7.738)
ກຳໄລໃນປີ	-	-	-	-	2.138.428	2.138.428	(415)	2.138.013
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	-	-	-	308.664	-	308.664	-	308.664
ຈ່າຍເງິນປັນຜົນ (ບົດອະທິບາຍ 21)	-	-	-	-	(83.965)	(83.965)	-	(83.965)
ໂອນເຂົ້າຄ້ຳສຳຮອງຕາມລະບຽບການ	-	-	210.977	-	(210.977)	-	-	-
ຍອດເຫຼືອໃນວັນທີ 31 ທັນວາ 2022	**6.717.215**	**985.621**	**776.685**	**443.608**	**2.667.088**	**11.590.217**	**(4.649)**	**11.585.568**

ທ່ານ ວັນແສງ ວັນນະວົງ
ຮັກສາການຜູ້ອຳນວຍການໃຫຍ່
ວັນທີ: 4 ເມສາ 2023

ທ່ານ ຄຳໃບ ຫລວງໄຊ
ຜູ້ອຳນວຍການຝ່າຍການເງິນ
ວັນທີ: 4 ເມສາ 2023

ໂຮງງານຜະລິດໄຟຟ້ານ້ຳງື່ມ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ: www.edlgen.com.la

ໃບລາຍງານສ່ວນປ່ຽນແປງຂອງທຶນແບບແຍກ
ສຳລັບປີສິ້ນສຸດວັນທີ 31 ທັນວາ 2022

	ເອກະສານລາຍງານການເງິນແບບແຍກ					
	ທຶນ ຈົດທະບຽນ ລ້ານກີບ	ສ່ວນເພີ່ມ ມູນຄ່າຮຸ້ນ ລ້ານກີບ	ຄັງສະສົມຕາມ ລະບຽບການ ລ້ານກີບ	ຜົນຕ່າງຈາກການ ແປງຄ່າເອກະສານ ລາຍງານການເງິນ ລ້ານກີບ	ກຳໄລສະສົມ ຍັງບໍ່ທັນໄດ້ ແບ່ງປັນ ລ້ານກີບ	ລວມ ລ້ານກີບ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2021						
ໃນວັນທີ 1 ມັງກອນ 2021	6.717.215	985.621	565.024	34.022	1.028.574	9.330.456
ກຳໄລໃນປີ	-	-	-	-	6.844	6.844
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	-	-	-	100.922	-	100.922
ຈ່າຍເງິນປັນຜົນ (ບົດອະທິບາຍທີ 21)	-	-	-	-	(167.930)	(167.930)
ໂອນເຂົ້າຄັງສຳຮອງຕາມລະບຽບການ	-	-	684	-	(684)	-
ຍອດເຫຼືອໃນວັນທີ 31 ທັນວາ 2021	**6.717.215**	**985.621**	**565.708**	**134.944**	**866.804**	**9.270.292**
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2022						
ໃນວັນທີ 1 ມັງກອນ 2022	6.717.215	985.621	565.708	134.944	866.804	9.270.292
ກຳໄລໃນປີ	-	-	-	-	2.109.771	2.109.771
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	-	-	-	308.664	-	308.664
ຈ່າຍເງິນປັນຜົນ (ບົດອະທິບາຍທີ 21)	-	-	-	-	(83.965)	(83.965)
ໂອນເຂົ້າຄັງສຳຮອງຕາມລະບຽບການ	-	-	210.977	-	(210.977)	-
ຍອດເຫຼືອໃນວັນທີ 31 ທັນວາ 2022	**6.717.215**	**985.621**	**776.685**	**443.608**	**2.681.633**	**11.604.762**

ທ່ານ ອັນແສງ ອັນນະວົງ
ຮັກສາການຜູ້ອຳນວຍການໃຫຍ່
ວັນທີ: 4 ເມສາ 2023

ທ່ານ ຄຳໃບ ທລວງໄຊ
ຜູ້ອຳນວຍການຝ່າຍການເງິນ
ວັນທີ: 4 ເມສາ 2023

ຖະໜົນນຶກຕະຍາລາວ-ໄທ, ບ້ານທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ์:www.edlgen.com.la

	ບິດ ອະທິບາຍ	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
		31 ທັນວາ 2022 ລ້ານກີບ	31 ທັນວາ 2021 ລ້ານກີບ	31 ທັນວາ 2022 ລ້ານກີບ	31 ທັນວາ 2021 ລ້ານກີບ
ກະແສເງິນສົດຈາກກິດຈະກຳການດຳເນີນງານ					
ກຳໄລກ່ອນອາກອນກຳໄລໃນປີ		2.218.460	3.882	2.190.218	6.844
ປັບປຸງ :					
ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ		540.227	520.357	536.514	505.732
ຕັດຮອນລາຍຈ່າຍຕົ້ນທຶນການອອກຮຸ້ນກູ້		34.481	24.040	34.481	24.040
ຂາດທຶນຈາກການສະສາງຊັບສິນຢູ່ພາຍໃຕ້ສຳປະທານ		7.526	28.116	7.526	28.099
ກຳໄລຈາກການສູນເສຍອຳນາດຄວບຄຸມໃນບໍລິສັດລູກ		(31.377)	-	-	-
ລາຍຮັບອື່ນໆ		(3.946.813)	-	(3.946.813)	-
ລາຍຮັບດອກເບ້ຍ - ຈາກພາກສ່ວນທີ່ກ່ຽວຂ້ອງ	17	(9.543)	(15.680)	(9.543)	(15.680)
ລາຍຈ່າຍທາງການເງິນ		1.049.068	855.815	1.045.382	842.501
ລາຍຈ່າຍອາກອນກຳໄລ		80.447	-	80.447	-
ກຳໄລຂອງຮຸ້ນຈາກເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	5	(1.439.306)	(960.715)	(1.439.306)	(960.715)
ການປ່ຽນແປງທຶນໝຸນວຽນ:		**(1.496.830)**	**455.815**	**(1.501.094)**	**430.821**
ຫຼຸດລົງ/(ເພີ່ມຂຶ້ນ) ໃນ					
ຊັບສິນທີ່ບໍ່ໝຸນວຽນອື່ນໆ		25.143	21.853	25.143	21.853
ເງິນຝາກສະຖາບັນການເງິນເພື່ອເປັນຫຼັກຊັບຄ້ຳປະກັນ		-	63.354	-	63.354
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ		(890.919)	(590.295)	(895.574)	(611.796)
ອາໂຫຼ ເຄື່ອງໃນສາງ		2.189	(248)	2.189	(248)
ຊັບສິນໝຸນວຽນອື່ນໆ		2.954.815	295.725	2.946.089	287.476
ໜີ້ຕ້ອງສົ່ງຜູ້ສະໜອງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		(22.845)	59.196	39.753	78.951
ລາຍຈ່າຍຄ້າງຈ່າຍ		(122.574)	239.857	(126.842)	239.222
ໜີ້ສິນໝຸນວຽນອື່ນໆ		82	339	82	339
ເງິນສົດທີ່ໃຊ້ໃນ ກິດຈະກຳການດຳເນີນງານ		449.061	545.596	489.746	509.972
ຈ່າຍດອກເບ້ຍ		(765.460)	(599.595)	(761.774)	(586.281)
ກະແສເງິນສົດຈາກກິດຈະກຳການດຳເນີນງານສຸດທິ		**(316.399)**	**(53.999)**	**(272.028)**	**(76.309)**
ກະແສເງິນສົດທີ່ໃຊ້ໃນກິດຈະກຳການລົງທຶນ					
ເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	5	(7.673)	(4.941)	(7.673)	(4.941)
ຈ່າຍເງິນສົດສຳລັບຊື້ຊັບສິນຢູ່ພາຍໃຕ້ສັນຍາສຳປະທານ		(57.660)	(87.526)	(53.770)	(103.508)
ຈ່າຍເງິນສົດສຳລັບຊື້ຊັບສິນບໍ່ມີຕົວຕົນ		(45)	-	(40)	-
ຮັບເງິນສົດຈາກການສະສາງຊັບສິນຢູ່ພາຍໃຕ້ສັນຍາສຳປະທານ		34.811	-	-	-
ສະສາງເງິນສົດຈາກການເສຍການຄວບຄຸມໃນບໍລິສັດລູກ		(25.760)	-	-	-
ຮັບເງິນປັນຜົນຈາກເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	5	467.993	475.472	467.993	475.472
ກະແສເງິນສົດສຸດທິທີ່ໃຊ້ໃນກິດຈະກຳການລົງທຶນ		**411.666**	**383.005**	**406.510**	**367.023**

ໃບລາຍງານກະແສເງິນສົດແບບລວມ ແລະ ແບບແຍກ
ສຳລັບປີສິ້ນສຸດ 31 ທັນວາ 2022

	ໝາຍ ອະທິບາຍ	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
		31 ທັນວາ 2022 ລ້ານກີບ	31 ທັນວາ 2021 ລ້ານກີບ	31 ທັນວາ 2022 ລ້ານກີບ	31 ທັນວາ 2021 ລ້ານກີບ
ກະແສເງິນສົດຈາກກິດຈະກຳທາງການເງິນ					
ລາຍຈ່າຍເງິນປັນຜົນ		(83.965)	(167.930)	(83.965)	(167.930)
ຮັບເງິນສົດຈາກການກູ້ຢືມໄລຍະສັ້ນ	13	330.866	682.253	330.866	682.253
ຊຳລະເງິນກູ້ຢືມໄລຍະສັ້ນ	13	(296.059)	(726.149)	(296.059)	(726.149)
ຊຳລະເງິນກູ້ຢືມໄລຍະຍາວ	13	(45.055)	(176.185)	(45.055)	(157.500)
ຮັບເງິນສົດຈາກການອອກຮຸ້ນກູ້	14	391.527	1.905.346	391.527	1.905.346
ຊຳລະຮຸ້ນກູ້	14	(451.253)	(1.951.667)	(451.253)	(1.951.667)
ກະແສເງິນສົດສຸດທິທີ່ໃຊ້ໃນກິດຈະກຳທາງການເງິນ		**(153.939)**	**(434.332)**	**(153.939)**	**(415.647)**
ການຫຼຸດລົງ ໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		(58.672)	(105.326)	(19.457)	(124.933)
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ໃນຕົ້ນປີ		202.585	265.554	161.702	247.215
ຜົນກະທົບຈາກອັດຕາແລກປ່ຽນໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		76.398	42.357	75.534	39.420
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນທ້າຍປີ		**220.311**	**202.585**	**217.779**	**161.702**
ລາຍການເຄື່ອນໄຫວທີ່ບໍ່ແມ່ນເງິນສົດ					
ໜີ້ຕ້ອງສົ່ງຊື້ຊັບສິນພາຍໃຕ້ສຳປະທານ		151.290	67.582	151.290	67.582
ຫັກທົດແທນໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງ ລະຫວ່າງກັນ ກັບພາກສ່ວນທີ່ກ່ຽວຂ້ອງ					
- ໜີ້ຕ້ອງຮັບການຄ້າ		2.435.658	-	2.435.658	-
- ເງິນກູ້ໄລຍະສັ້ນກັບພາກສ່ວນທີ່ກ່ຽວຂ້ອງ		449.615	-	449.615	-
- ເງິນກູ້ໄລຍະຍາວ	13	(2.475.365)	-	(2.475.365)	-
- ດອກເບ້ຍຄ້າງຈ່າຍ		(770.421)	-	(770.421)	-
ໂອນລາຍການໜີ້ໃຫ້ພາກສ່ວນທີ່ກ່ຽວຂ້ອງ					
- ເງິນກູ້ໄລຍະຍາວ	13	(3.799.577)	-	(3.799.577)	-
- ດອກເບ້ຍຄ້າງຈ່າຍ		(128.340)	-	(128.340)	-

ທ່ານ ວັນແສງ ວັນນະວົງ
ຮັກສາການຜູ້ອຳນວຍການໃຫຍ່
ວັນທີ: 4 ເມສາ 2023

ທ່ານ ຄຳໃບ ຫລວງໄຊ
ຜູ້ອຳນວຍການຝ່າຍການເງິນ
ວັນທີ: 4 ເມສາ 2023

ຊີວະປະຫວັດຫຍໍ້ ຂອງ ຄະນະສະພາບໍລິຫານຜູ້ໃໝ່

ຊີວະປະຫວັດຫຍໍ້ຂອງ ທ່ານ ສຸລິວັດ ສຸວັນນະຈູມຄຳ

ຊື່ ແລະ ນາມສະກຸນ: ທ່ານ ສຸລິວັດ ສຸວັນນະຈູມຄຳ
ວັນ/ເດືອນ/ປີເກີດ: 30/10/1977
ອາຍຸ: 45 ປີ
ທີ່ຢູ່ປັດຈຸບັນ: ບ້ານ ໂພນສະຫວັນໃຕ້, ເມືອງສີສັດຕະນາກ, ນະຄອນຫລວງວຽງຈັນ
ຄວາມຮູ້ພາສາຕ່າງປະເທດ: ພາສາອັງກິດ, ພາສາໂປໂລຍ, ໄທ
ລະດັບວິຊາສະເພາະສູງສຸດ: ປະລິນຍາໂທ ດ້ານວິຊາພົວພັນຕ່າງປະເທດດ້ານເສດຖະກິດ ແລະ ການເມືອງ, ມະຫາວິທະຍາໄລ Lodz, LODZ, ປະເທດໂປໂລຍ.

ປະສົບການໃນການເຮັດວຽກ:

ປີ 2002-2004 : ເປັນວິຊາການຮັບຜິດຊອບດ້ານການຮ່ວມມືສະຖາບັນການເງິນສາກົນ (IFIs), ພະແນກຮ່ວມມືສາກົນ, ກົມການເງິນຕ່າງປະເທດ, ກະຊວງການເງິນ

ປີ 2004-2007 : ເຈົ້າໜ້າທີ່ອາວຸໂສຮັບຜິດຊອບວຽກງານຄຸ້ມຄອງໜີ້ສິນສາທາລະນະ, ກົມການເງິນຕ່າງປະເທດ ກະຊວງການເງິນ.

ປີ 2007-2009 : ເປັນເຈົ້າໜ້າທີ່ອາວຸໂສ, ເລຂາຮອງລັດຖະມົນຕີກະຊວງການເງິນ

ປີ 2009-2011 : ຮອງຫົວໜ້າພະແນກ, ເລຂາຮອງລັດຖະມົນຕີກະຊວງການເງິນ

ປີ 2011-2013 : ປະຈຳການເປັນທີ່ປຶກສາ ຫົວໜ້າຫ້ອງການຜູ້ຕ່າງໜ້າກຸ່ມອາຊີຕາເວັນອອກສຽງໃຕ້ຢູ່ສຳນັກງານໃຫຍ່ທະນາຄານໂລກ, ວໍຊິງຕັນ ດີຊີ ສະຫະລັດ ອາເມລິກາ.

ປີ 2013-2014 : ຫົວໜ້າພະແນກ, ພະແນກເສດຖະກິດມະຫາພາກ, ກົມນະໂຍບາຍການເງິນ, ກະຊວງການເງິນ.

ປີ 2014-2016 : ຮອງຫົວໜ້າກົມ, ເລຂາຮອງນາຍົກລັດຖະມົນຕີ, ສຳນັກງານນາຍຍົກລັດຖະມົນຕີ

ປີ 2016-2018 : ຮອງຫົວໜ້າກົມງົບປະມານ, ກະຊວງການເງິນ

ປີ 2018-2019 : ຮອງຫົວໜ້າກົມການເງິນຕ່າງປະເທດ ແລະ ຄຸ້ມຄອງໜີ້ສິນ, ກະຊວງການເງິນ

ປີ 2019-2021 : ຫົວໜ້າກົມການເງິນຕ່າງປະເທດ ແລະ ຄຸ້ມຄອງໜີ້ສິນ, ກະຊວງການເງິນ

- ປັດຈຸບັນ:
  - ເດືອນມັງກອນ 2022 - ປະຈຸບັນ : ຫົວໜ້າກົມຄຸ້ມຄອງໜີ້ສິນສາທາລະນະ, ກະຊວງການເງິນ

ຊີວະປະຫວັດຫຍໍ້ຂອງ ທ່ານ ປະສົມເພັດ ຄຳຕັນ

ຊື່ ແລະ ນາມສະກຸນ: ທ່ານ ປະສົມເພັດ ຄຳຕັນ

ວັນ/ເດືອນ/ປີ/ເກີດ: 25/05/1970

ອາຍຸ: 53 ປີ

ສັນຊາດ: ລາວ

ທີ່ຢູ່ປັດຈຸບັນ: ບ້ານ ວັດນາກ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ

ລະດັບວິຊາສະເພາະສູງສຸດ: - ປະລິນຍາໂທ ດ້ານເສດຖະກິດ-ທຸລະກິດ, ທີ່ມະຫາໄລ ກຸງຣີ, ປະເທດ ສ ເກົາຫຼີ.

- ປະລິນຍາຕີດ້ານຄຸ້ມຄອງກົນຈັກ ທີ່ມະຫາວິທະຍາໄລ 2 ທັນວາ, ສປປ ລາວ.

<u>ປະສົບການເຮັດວຽກ:</u>

ປີ 1994-1998 : ວິຊາການກົມການເງິນຕາຕ່າງປະເທດ, ກະຊວງການເງິນ

ປີ 1998-2007 : ວິຊາການກົມງົບປະມານ, ກະຊວງການເງິນ

ປີ 2007-2008 : ຮອງຫົວໜ້າພະແນກສະຖິຕິການເງິນ, ກົມນະໂຍບາຍການເງິນ, ກະຊວງການເງິນ

ປີ 2008-2013 : ຫົວໜ້າຄຸ້ມຄອງໂຄງການກູ້ຢືມ ແລະ ຊ່ວຍເຫຼືອລ້າ ຈາກທະນາຄານໂລກ, ກະຊວງການເງິນ

ປີ 2013-2016 : ຫົວໜ້າພະແນກຄຸ້ມຄອງທຶນກູ້ຢືມ ແລະຊ່ວຍເຫຼືອລ້າ, ກົມເງິນຕາຕ່າງປະເທດ, ກະຊວງການເງິນ

ປີ 2016-2020 : ຮອງຫົວໜ້າກົມນະໂຍບາຍການເງິນ ແລະ ນິຕິກຳ, ກະຊວງການເງິນ

ປີ 2020- ປະຈຸບັນ : ຮອງຫົວໜ້າກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ, ກະຊວງການເງິນ

ຊີວະປະຫວັດຫຍໍ້ຂອງ ທ່ານ ຈັນທະບຸນ ສຸກອາລຸນ

ຊື່ ແລະ ນາມສະກຸນ:	ທ່ານ ຈັນທະບຸນ ສຸກອາລຸນ
ວັນ/ເດືອນ/ປີ/ເກີດ:	03/05/1973
ອາຍຸ:	50 ປີ
ສັນຊາດ:	ລາວ
ທີ່ຢູ່ປັດຈຸບັນ:	ບ້ານ ດອນກອຍ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ
ລະດັບວິຊາສະເພາະສູງສຸດ:	- ປະລິນຍາໂທ ສາຂາ ບໍລິຫານທຸລະກິດ, emphasis in Finance, Avila University, Kansas City, ປະເທດສະຫະລັດອາເມລິກາ. - ປະລິນຍາຕີສາຂາ ວິສະວະກຳໄຟຟ້າ ຢູ່ມະຫາວິທະຍາໄລແຫ່ງຊາດລາວ.

<u>ການເຝິກອົບຮົມ:</u>

2008	Master Key Legal and Contractual issue in Project Financing. Project Finance Law and Infrastructure School.
2010	Arbitration for Judges. International Law Institute, Washington DC. USA

<u>ປະສົບການເຮັດວຽກ:</u>

1997-2000	ຫົວໜ້າພະແນກການສ້ອມແປງ, ບໍລິສັດ ຫ້ວຍເຫາະພາວເວີ້ ຈຳກັດ, ແຂວງອັດຕະປື
2000-2001	ພະນັກງານຢູ່ກົມໄຟຟ້າ, ກະຊວງອຸດສາຫະກຳ ແລະ ຫັດຖະກຳ
2004	ພະນັກງານສັງກັດຢູ່ກົມສົ່ງເສີມ ແລະ ພັດທະນາພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່
2007	ຮອງຫົວໜ້າພະແນກເຈລະຈາ ແລະ ຄຸ້ມຄອງສັນຍາ, ກົມສົ່ງເສີມ ແລະ ພັດທະນາພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່
2008	ຫົວໜ້າພະແນກເຈລະຈາ ແລະ ສັນຍາຄຸ້ມຄອງ, ກົມສົ່ງເສີມ ແລະ ພັດທະນາພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່.
2012	ຮອງຫົວໜ້າກົມທຸລະກິດພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່.
2017	ຮັກສາການຫົວໜ້າກົມແຜນການ ແລະ ການຮ່ວມມື, ກະຊວງພະລັງງານ ແລະ ບໍ່ແຮ່
2019-2020	ຫົວໜ້າກົມແຜນການ ແລະ ການຮ່ວມມື, ກະຊວງພະລັງງານ ແລະ ບໍ່ແຮ່
2020-ປັດຈຸບັນ	ຜູ້ອຳນວຍການໃຫຍ່ລັດວິສາຫະກິດໄຟຟ້າລາວ
2020-ປັດຈຸບັນ	ຮອງປະທານສະພາບໍລິຫານ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ຊີວະປະຫວັດຫຍໍ້ຂອງ ທ່ານ ພົງສະຫວັດ ເສນາພວນ

ຊື່ ແລະ ນາມສະກຸນ:	ທ່ານ ພົງສະຫວັດ ເສນາພວນ
ວັນ/ເດືອນ/ປີເກີດ:	10/10/1978
ອາຍຸ:	44 ປີ
ທີ່ຢູ່ປັດຈຸບັນ:	ບ້ານ ໜອງບົກໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ
ລະດັບວິຊາສະເພາະສູງສຸດ:	ວິທະຍາໄລ ບໍລິຫານທຸລະກິດ ແສງສະຫວັນ

ປະສົບການເຮັດວຽກ:

ປີ 2001 - ປະຈຸບັນ	ປະທານສະພາບໍລິຫານ ແລະ ປະທານບໍລິຫານ ບໍລິສັດ ພົງຊັບທະວີກໍ່ສ້າງຂົວທາງ, ເຄຫາສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ.
ປີ 2020-ປັດຈຸບັນ	ກຳມະການສະພາບໍລິຫານ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

- ປັດຈຸບັນເປັນສະພາບໍລິຫານຢູ່ 01 ບໍລິສັດ:
  1) ບໍລິສັດ ພົງຊັບທະວີກໍ່ສ້າງຂົວທາງ, ເຄຫາສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ

ຊີວະປະຫວັດຫຍໍ້ຂອງ ທ່ານ ສົມລັດ ເມກອາກາດ

ຊື່ ແລະ ນາມສະກຸນ: ທ່ານ ສົມລັດ ເມກອາກາດ

ວັນ/ເດືອນ/ປີເກີດ: 21/07/1972

ອາຍຸ: 50 ປີ

ທີ່ຢູ່ປັດຈຸບັນ: ບ້ານ ຕານມີໄຊ, ເມືອງ ໄຊທານີ, ນະຄອນຫລວງວຽງຈັນ

ລະດັບວິຊາສະເພາະສູງສຸດ: ປະລິນຍາໂທ ສາຂາ ການບໍລິຫານຄຸ້ມຄອງ, ທີ່ ມະຫາວິທະຍາໄລ ຊິງຫົວ, ສປ ຈີນ

ດ້ານພາສາຕ່າງປະເທດ: ພາສາອັງກິດ, ພາສາໄທ.

ການຝຶກອົບຮົມ:

- ປີ 1999 – 2000 ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ: ເສດຖະສາດຈຸລະພາກ (ເສດຖະສາດຈຸລະພາກ ແລະ ເສດຖະສາດມະຫາພາກ)
- ປີ 2000 ສະຖາບັນການເມືອງແລະການປົກຄອງແຫ່ງຊາດ:ເສດຖະສາດລະຫວ່າງປະເທດ
- ປີ 2002 ຍົກລະດັບຄວາມສາມາດການຄ້າທາງເອເລັກໂທນິກສຳລັບ SMEs, ປະເທດອິນເດຍ
- ປີ 2002 ການສົ່ງເສີມການຄ້າ, ສະຖາບັນການຄ້າຕ່າງປະເທດຂອງສິງກະໂປ.
- ປີ 2003 ບັນຫາ ແລະ ໂອກາດການຄ້າສາກົນ, ສະຖາບັນການຄ້າ ແລະ ການພັດທະນາ, (ບາງກອກ, ປະເທດໄທ)
- ປີ 2004 ກົດໝາຍແພ່ງ ແລະ ການຄ້າ, ມະຫາວິທະຍາໄລ ນາໂກຍາ, ປະເທດຍີ່ປຸ່ນ
- ປີ 2004 ການຊ່ວຍເຫຼືອດ້ານເຕັກນິກທາງກົດໝາຍ, ສະຖາບັນຝຶກອົບຮົມ ແລະ ຄົ້ນຄວ້າ, ກະຊວງຍຸຕິທຳ, ປະເທດເກົາຫຼີໃຕ້.
- ປີ 2008 ການເຈລະຈາສາກົນ, ກະຊວງການຕ່າງປະເທດ, ສປປ ລາວ.

ປະສົບການເຮັດວຽກ:

- ປີ 1999 - 2011 ພະນັກງານ, ຫົວໜ້າໜ່ວຍງານ, ຫົວໜ້າພະແນກ ກົດໝາຍອຸດສາຫະກຳ ແລະ ການຄ້າ, ຫົວໜ້າພະແນກ ກົດໝາຍ, ຫົວໜ້າພະແນກຝຶກອົບຮົມ ທີ່ ສະຖາບັນ ຄົ້ນຄວ້າເສດຖະກິດການຄ້າ, ກະຊວງ ອຸດສາຫະກຳ ແລະ ການຄ້າ.
- ປີ 2011 – 2012 ຫົວໜ້າພະແນກ ກວດກາການຄ້າ, ກົມການຄ້າພາຍໃນ, ກະຊວງ ອຸດສາຫະກຳ ແລະ ການຄ້າ.
- ປີ 2012 - 2014 ຫົວໜ້າພະແນກທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກົມທະບຽນ ແລະ ຄຸ້ມ ຄອງວິສາຫະກິດ, ກະຊວງ ອຸດສາຫະກຳ ແລະ ການຄ້າ.
- ປີ 2014 - 2016 ຮອງຫົວໜ້າກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກົມທະບຽນ ແລະ ຄຸ້ມ ຄອງວິສາຫະກິດ, ກະຊວງ ອຸດສາຫະກຳ ແລະ ການຄ້າ.
- ປີ 2016 - ປັດຈຸບັນ ຜູ້ອຳນວຍການ ບໍລິສັດ ຝັງຊັບທະວິກໍ່ສ້າງຂົວທາງ, ເຄຫາສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ
- ປີ 2020-ປັດຈຸບັນ ກຳມະການສະພາບໍລິຫານ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ຊີວະປະຫວັດຫຍໍ້ຂອງ ທ່ານ ສຸກສະຫວາດ ໂສສຸພັນ

ຊື່ ແລະ ນາມສະກຸນ:	**ທ່ານ ສຸກສະຫວາດ ໂສສຸພັນ**
ວັນ/ເດືອນ/ປີເກີດ:	20/03/1985
ອາຍຸ:	37 ປີ
ທີ່ຢູ່ປັດຈຸບັນ:	ບ້ານ: ເມືອງນ້ອຍ, ເມືອງ: ໄຊເສດຖາ, ນະຄອນຫຼວງວຽງຈັນ
ລະດັບວິຊາສະເພາະສູງສຸດ:	ປະລິນຍາໂທ ສາຂາວິຊາວິສະວະກຳພະລັງງານ-ສິ່ງແວດລ້ອມ, ປະເທດຍີ່ປຸ່ນ
ດ້ານພາສາຕ່າງປະເທດ:	ພາສາອັງກິດ, ພາສາຍີ່ປຸ່ນ ແລະ ໄທ

ປະສົບການເຮັດວຽກ:

- ປີ 2020 ເດືອນ 07 ຍົກຍ້າຍມາຈາກ ກົມແຜນການ ແລະ ການຮ່ວມມື ກະຊວງພະລັງງານ ແລະ ບໍ່ແຮ່ ມາ ສັງກັດ ລັດວິສາຫະກິດໄຟຟ້າລາວ ແລະ ຖືກແຕ່ງຕັ້ງເປັນ ຮອງຫົວໜ້າຝ່າຍທຸລະກິດ
- ປີ 2020 ເດືອນ 10 ຖືກແຕ່ງຕັ້ງເປັນ ວ່າການຫົວໜ້າຝ່າຍແຜນການ-ການເງິນ
- ປີ 2022 ຖືກແຕ່ງຕັ້ງເປັນ ຮອງຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ

ໃບມອບສັນທະ

PROXY

ຂຽນທີ່ .....
Written at

ວັນທີ ..... ເດືອນ ..... ປີ .....
Date Month Year

(1) ຂ້າພະເຈົ້າ ..... ສັນຊາດ ..... ວັນທີ, ເດືອນ ແລະ ປີເກີດ .....
I/We Nationality date, month and year of birth

ບັດປະຈຳຕົວເລກທີ ..... ຢູ່ເຮືອນເລກທີ ..... ບ້ານ ..... ຖະໜົນ .....
ID card number Reside at Village Road

ເມືອງ ..... ແຂວງ .....
District Province

(2) ເປັນຜູ້ຖືຮຸ້ນ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.
Being a shareholder of EDL-Generation Public Company.

ໂດຍຖືຮຸ້ນສາມັນຈຳນວນລວມທັງໝົດ ..... ຮຸ້ນຊຶ່ງເທົ່າກັບຈຳນວນສຽງທີ່ຈະລົງຄະແນນສຽງໄດ້.
holding the ordinary shares in the total amount of shares, which are equivalent to the same number of votes.

(3) ຂໍມອບໝາຍໃຫ້
Hereby appoint

(1) ☐ ທ່ານ/ທ່ານນາງ ..... ອາຍຸ ..... ປີ,ຢູ່ເຮືອນເລກທີ .....
Mr./Ms. age years, reside at

ຖະໜົນ ..... ບ້ານ ..... ເມືອງ .....
Road Village District

ແຂວງ ..... ລະຫັດໄປສະນີ ..... ຫຼື
Province Postal Code or

(2) ☐ ທ່ານ ຄຳມຸນ ວິພົງໄຊ ..... ອາຍຸ 65 ປີ, ຢູ່ເຮືອນເລກທີ 390
Mr. Khammoune VIPHONGXAY age 65 years, resides at 390

ຖະໜົນ ..... ບ້ານ .....ໂພນສະຫວ່າງ... ເມືອງ ..... ຈັນທະບູລີ
Road Village Phonsavang District Chanthabouly

ແຂວງ ..... ລະຫັດໄປສະນີ 2392 ..... ຫຼື
Province Postal Code 2392 or

(3) ☐ ທ່ານ ຄຳແກ້ວ ວິສີສົມບັດ ..... ອາຍຸ 48 ປີ,ຢູ່ເຮືອນເລກທີ 015
Mr. Khamkeo VISISOMBATH age 48 years, resides at 015

ຖະໜົນ ..... ບ້ານ.....ໂພນໄຊ ..... ເມືອງ ..... ໄຊເສດຖາ
Road Village Phonxay District Xaysetha

ແຂວງ.....ນະຄອນຫຼວງວຽງຈັນ ..... ລະຫັດໄປສະນີ 2392 ..... ຫຼື
Province Postal Code 2392 or

(4) ☐ ທ່ານ ປອ. ພັນປະກິດ ອ່ອນພັນດາລາ ..... ອາຍຸ 44 ປີ, ຢູ່ເຮືອນເລກທີ……593……..
Dr. Phanhpakit ONPHANHDALA age 44 years, resides at 593

ຖະໜົນ ..... ບ້ານ ..... ຫ້ວຍຫົ່ງ ..... ເມືອງ ..... ຈັນທະບູລີ .....
Road Village Houyhong District Chanthabouly

ແຂວງ ..... ນະຄອນຫຼວງວຽງຈັນ ..... ລະຫັດໄປສະນີ 2392 .....
Vientiane Capital Postal Code 2392

ຄົນໃດຄົນໜຶ່ງພຽງຄົນດຽວ ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງແທນຂ້າພະເຈົ້າ ໃນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ໃນວັນທີ 25 ເມສາ 2023 ເວລາ 15:00 ໂມງ.

Any one of them to be my/our proxy to attend and vote on my/our behalf at the Annual General Meeting for the Year 2022 to be on 25 April 2023 at 3:00 pm.

ສະຖານທີ່ຫ້ອງປະຊຸມ ຊັ້ນທີ 1 ອາຄານສຳນັກງານ ລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງ ວຽງຈັນ ຫຼື ທີ່ໄດ້ເລື່ອນໄປໃນວັນ, ເວລາ ແລະ ສະຖານທີ່ອື່ນດ້ວຍ.

At meeting room, 1st floor, EDL Headquarter building, Lao-Thai Friendship Road, Thongkang Village, Sisattanak District, Vientiane Capital or any adjournment at any date, time and place thereof.

(4) ຂ້າພະເຈົ້າຂໍມອບໝາຍໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າໃນກອງປະຊຸມຄັ້ງນີ້ດັ່ງນີ້:

I/We hereby authorize the proxy to vote on my/our behalf at this meeting as follows:

☐ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະລົງມະຕິແທນຂ້າພະເຈົ້າໄດ້ທຸກປະການຕາມທີ່ເຫັນສົມຄວນ;

To grant my/our proxy to consider and vote on my/our behalf as he/she may deem appropriate in all respects;

☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າແລະມີສິດພິຈາລະນາແລະລົງມະຕິແທນຂ້າພະເຈົ້າໃນບາງວາລະ;

To grant my/our proxy to vote as per my/our intention and consider and vote on my/our behalf in some agendas as he/she may deem appropriate in all respects;

☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ.

To grant my/our proxy to vote as per my/our intention

ວາລະທີ 1: ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນຄັ້ງຜ່ານມາ.

Agenda No. 1 To report on the implementation results of the resolutions of the previous Meeting of Shareholders.

ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2023.

Agenda No. 2 To consider and adopt the Minutes of the Extraordinary Meeting of Shareholders No.1/2023.

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ວາລະທີ 3: ພິຈາລະນາ ແລະ ອະນຸມັດເອົາລາຍງານການເງິນ 6 ເດືອນຕົ້ນປີ 2022 ແລະ ການບໍ່ຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2022.

Agenda No. 3 To consider and approve the Company's financial statements for the first six-month period of 2022 and no dividend payment from the business performance of the first six-month period of 2022.

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ວາລະທີ 4: ພິຈາລະນາ ແລະ ອະນຸມັດບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2022 ລວມທັງລາຍງານການເງິນ ຂອງບໍລິສັດ ປີ 2022 ແລະ ແຜນການດຳເນີນທຸລະກິດຂອງບໍລິສັດ ປີ 2023.

Agenda No. 4 To consider and approve the the Company's business performance report including the Company's financial statements for the year 2022; the Company's 2023 business plan.

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ວາລະທີ 5. ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ປະຈຳປີ 2022, ການກຳນົດວັນປິດ ປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນທີ່ຈະໄດ້ຮັບເງິນປັນຜົນຈາກຜົນການດຳເນີນທຸລະກິດ ຂອງ ບໍລິສັດ ແລະ ການກຳນົດວັນທີຈ່າຍເງິນປັນຜົນ.

Agenda No. 5 To consider and approve the dividend payment from the Company's 2022 business performance, the determination of the closing date of shareholders register book to determine the right of shareholders to receive the dividend (the "Record Date") and the dividend payment date.

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ວາລະທີ 6. **ພິຈາລະນາ ແລະ ອະນຸມັດການເພີ່ມຕົວຕົວຄູນດັດສະນີເງິນເດືອນພື້ນຖານ ຂອງພະນັກງານ ໃນສົກປີ 2023.**

Agenda No. 6 **To consider and approve the revision of index multiplier of the basic salary of the Company's employees for 2023**.

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ວາລະທີ 7: **ການແຕ່ງຕັ້ງປະທານສະພາບໍລິຫານ, ກຳມະການສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າ, ການແຕ່ງຕັ້ງຮອງປະທານສະພາບໍລິຫານ, ກຳມະການສະພາບໍລິຫານບາງທ່ານທີ່ຄົບອາຍຸການ, ການແຕ່ງຕັ້ງກຳມະການສະພາບໍລິຫານເພີ່ມ ແລະ ການກຳນົດອາຍຸການຂອງບັນດາກຳມະການສະພາບໍລິຫານບໍລິສັດ.**

Agenda No. 7: **To consider and approve the appointment of Chairman and Director of the Board of Directors in replacement of former members, the re-appointment of Vice Chairman and some Directors, the appointment of additional Directors, and the determination of the term of office of Directors of the Company's Board of Directors.**

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ວາລະທີ 8: **ພິຈາລະນາ ແລະ ຮັບຮອງການດັດແກ້ກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍກຳມະການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ.**

Agenda No. 8 **To consider and adopt the amendments to the Articles of Association of the Company in Article 9: Directors and Article 12: Board of Directors.**

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

(5) ການລົງຄະແນນສຽງຂອງຜູ້ຕາງໜ້າ ໃນວາລະປະຊຸມໃດທີ່ບໍ່ເປັນໄປຕາມທີ່ລະບຸໄວ້ໃນໃບມອບສັນທະສະບັບນີ້ ໃຫ້ຖືວ່າການລົງຄະແນນສຽງນັ້ນບໍ່ຖືກຕ້ອງ ແລະບໍ່ແມ່ນການລົງຄະແນນສຽງຂອງຂ້າພະເຈົ້າ ໃນຖານະຜູ້ຖືຮຸ້ນ.

Voting of the proxy in any agenda that is not as specified in this Proxy shall be considered as invalid and shall not be my/our voting as a shareholder.

(6) ໃນກໍລະນີທີ່ຂ້າພະເຈົ້າ ບໍ່ໄດ້ລະບຸຄວາມຕ້ອງການໃນການລົງຄະແນນສຽງ ໃນວາລະປະຊຸມໃດໄວ້ ຫຼື ລະບຸໄວ້ບໍ່ຈະແຈ້ງໃຫ້ຖືວ່າເຫັນດີ.

In case I/we have not specified my/our voting intention in any agenda or not clearly specified, it shall be deemed approved.

ການກະທຳໃດ ທີ່ຜູ້ຕາງໜ້າໄດ້ກະທຳໄປໃນກອງປະຊຸມ, ເວັ້ນແຕ່ກໍລະນີທີ່ຜູ້ຕາງໜ້າບໍ່ລົງຄະແນນສຽງ ຕາມທີ່ຂ້າພະເຈົ້າລະບຸໃນໃບມອບສັນທະສະບັບນີ້, ໃຫ້ຖືວ່າຂ້າພະເຈົ້າໄດ້ກະທຳເອງທຸກຢ່າງ.

Any business carried out by the proxy at the said meeting, except in case that the proxy does not vote according to my/our intention(s) specified in the Proxy, shall be deemed as having been carried out by myself/ourselves in all respects.

ລົງລາຍເຊັນ/Signed ຜູ້ຖືຮຸ້ນທີ່ມອບໝາຍ/Grantor

(.....)

ລົງລາຍເຊັນ/Signed ຜູ້ຕາງໜ້າ/Proxy

(.....)

<u>ໝາຍເຫດ</u>

1. ຜູ້ຖືຮຸ້ນທີ່ມອບໝາຍຈະຕ້ອງມອບໝາຍໃຫ້ຜູ້ຕາງໜ້າພຽງຜູ້ດຽວເປັນຜູ້ເຂົ້າຮ່ວມປະຊຸມແລະລົງຄະແນນສຽງ, ແລະບໍ່ສາມາດແບ່ງແຍກຈຳ ນວນຮຸ້ນ ໃຫ້ຜູ້ຕາງໜ້າຫຼາຍຄົນເພື່ອແຍກການລົງຄະແນນສຽງໄດ້.

   The shareholder appointing the proxy must authorize only one proxy to attend and vote at the meeting and may not split the number of shares to several proxies for splitting votes.

2. ກົດໝາຍວ່າດ້ວຍທະບຽນສານ (ສະບັບປັບປຸງ) ເລກທີ 11/ສພຊ, ລົງວັນທີ 26 ພະຈິກ 2009, ເພື່ອເປັນການຮັບປະກັນຄວາມຜູກພັນຂອງຜູ້ມອບໝາຍແລະຜູ້ຕາງໜ້າທາງດ້ານກົດໝາຍ, ດັ່ງນັ້ນໃບມອບສັນທະສະບັບນີ້ຈະຕ້ອງໄດ້ນຳໄປຈົດທະບຽນສານ, ໃນນີ້ບໍລິສັດຈະບໍ່ຮັບຜິດຊອບໃດໆໃນກໍລະນີທີ່ໃບມອບສັນທະສະບັບນີ້ທີ່ຍື່ນຕໍ່ບໍລິສັດບໍ່ໄດ້ຈົດທະບຽນສານ.

   Pursuant to the Law on Notary (Amended) No. 11/NA, dated 26 November 2009, in order for the appointment by the shareholder to the proxy to have legal effect, this Proxy must be registered with the court. In this regard, the Company will not take any responsibility in the case where the Proxy submitted to the Company has not been registered with the court.

ເອກະສານ ແລະ ຫຼັກຖານ ທີ່ຜູ້ເຂົ້າຮ່ວມກອງປະຊຸມຕ້ອງໃຊ້ເພື່ອການສະເໜີໂຕ ໃນການເຂົ້າຮ່ວມກອງປະຊຸມ, ການມອບໝາຍ, ການລົງທະບຽນ ແລະ ການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນ

ກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2022 ຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແມ່ນຈັດຂຶ້ນເປັນ 2 ລະບົບ ຄື: ຜູ້ຖືຮຸ້ນສາມາດເຂົ້າຮ່ວມຜ່ານລະບົບອອນລາຍ ຜ່ານລະບົບ AGM: https://agm-egm.edlgen.com.la/user/login ແລະ ສາມາດເຂົ້າຮ່ວມແບບຊ້ອງໜ້າ ທີ່ຫ້ອງປະຊຸມຊັ້ນ 1 ສຳນັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ. ເຊິ່ງຜູ້ຖືຮຸ້ນຕ້ອງປະຕິບັດຕາມແຕ່ລະກໍລະນີດັ່ງລຸ່ມນີ້:

- ຊື່ອີເມວ ຂອງບໍລິສັດ ຜ-ຟຟລ ທີ່ແຈ້ງເຊີນເຖິງຜູ້ຖືຮຸ້ນ ແມ່ນ: agm-egm@edlgen.com.la.

I. ສຳລັບຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມຜ່ານລະບົບອອນລາຍ AGM

ຜູ້ຖືຮຸ້ນ ທີ່ຈະມາເຂົ້າຮ່ວມກອງປະຊຸມຜ່ານລະບົບອອນລາຍໄດ້ ແມ່ນຜູ້ທີ່ໄດ້ຮັບການຕອບຮັບຢືນຢັນການເຂົ້າຮ່ວມຈາກບໍລິສັດເທົ່ານັ້ນ ເຊິ່ງຕ້ອງແຈ້ງຈຸດປະສົງເຂົ້າຮ່ວມປະຊຸມທາງອອນລາຍຜ່ານລະບົບ AGM ທີ່ບໍລິສັດໄດ້ແຈ້ງລາຍລະອຽດຜ່ານອີເມວ, ເລີ່ມລົງທະບຽນປະຊຸມທາງອອນລາຍເລີ່ມແຕ່ວັນທີ່ແຈ້ງອີເມວ ເຖິງພາຍໃນ ວັນທີ 21 ເມສາ 2023.

1. **ເອກະສານທີ່ຕ້ອງກະກຽມໃນການຢັ້ງຢືນເຂົ້າຮ່ວມກອງປະຊຸມ AGM ໃນແຕ່ລະຮູບແບບ ມີດັ່ງນີ້:**

1) ສຳລັບຜູ້ຖືຮຸ້ນທີ່ມາດ້ວຍຕົນເອງ ທີ່ມີຈຸດປະສົງແຈ້ງເຂົ້າປະຊຸມແບບຊ້ອງໜ້າ, ໃນກໍລະນີນີ້ ຜູ້ຖືຮຸ້ນບໍ່ຈຳເປັນຕ້ອງນຳສິ່ງເອກະສານ ອີເລັກໂທຣນິກໃດໆ ເຂົ້າສູ່ລະບົບ AGM.

2) ສຳລັບຜູ້ຖືຮຸ້ນທີ່ມອບໃຫ້ຜູ້ຕາງໜ້າ:

2.1. ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງມະຕິແທນຜູ້ຖືຮຸ້ນໄດ້ທຸກປະການຕາມທີ່ເຫັນສົມຄວນ (ກໍລະນີທີ່ມອບໃຫ້ ກຳມະການອິດສະຫຼະ ເທົ່ານັ້ນ).

2.2. ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ.

- ການເຂົ້າຮ່ວມກອງປະຊຸມຂອງຜູ້ຖືຮຸ້ນທີ່ມອບໃຫ້ຜູ້ຕາງໜ້າລັກສະນະ 2.1 ແລະ 2.2 ຜູ້ຖືຮຸ້ນຈະຕ້ອງທຳການສະແກນເອກະສານບັດປະຈຳຕົວ /ໜັງສືຜ່ານແດນ (ສຳລັບຄົນຕ່າງປະເທດ) ຂອງຜູ້ຖືຮຸ້ນເອງ ເພື່ອຢືນຢັນຕົວຕົນ, ເອກະສານໃບມອບສັນທະ, ເອກະສານສຳຄັນຕ່າງໆ ໂດຍເອກະສານທັງໝົດຕ້ອງເປັນຟາຍ ນາມສະກຸນ PDF (ລວມເອກະສານໃນຟາຍດຽວ) ເພື່ອນຳເຂົ້າສູ່ລະບົບ AGM ເພື່ອໃຫ້ເຈົ້າໜ້າທີ່ທຳການລົງຄະແນນສຽງໃຫ້ສຳເລັດ.
- ນອກຈາກນີ້ຜູ້ຖືຮຸ້ນຈະຕ້ອງລົງທະບຽນໃຫ້ຜູ້ຕາງໜ້າ (ຜູ້ຕາງໜ້າທົ່ວໄປທີ່ບໍ່ແມ່ນກຳມະການ ອິດສະຫຼະ) ໂດຍທຳການອັບໂຫຼດເອກະສານບັດປະຈຳຕົວ/ໜັງສືຜ່ານແດນ (ສຳລັບຄົນຕ່າງປະເທດ) ຂອງຜູ້ຕາງໜ້າ ເພື່ອຢືນຢັນຕົວຕົນ. ໂດຍຕ້ອງເປັນຟາຍ ນາມສະກຸນ JPG, JPEG ເພື່ອນຳເຂົ້າສູ່ລະບົບ AGM ເພື່ອໃຫ້ເຈົ້າໜ້າທີ່ທຳການລົງຄະແນນສຽງໃຫ້ສຳເລັດ.

3) ສຳລັບຜູ້ຖືຮຸ້ນເຂົ້າຮ່ວມແບບອອນລາຍດ້ວຍຕົນເອງຈະຕ້ອງໄດ້ ອັບໂຫລດເອກະສານບັດປະຈຳຕົວ /ໜັງສືຜ່ານແດນ (ສຳລັບຄົນຕ່າງປະເທດ) ເປັນຟາຍນາມສະກຸນ JPG, JPEG ເພື່ອນຳເຂົ້າສູ່ລະບົບ AGM ເພື່ອຢືນຢັນຕົວຕົນເທົ່ານັ້ນ, ສຳລັບກໍລະນີນີ້ຜູ້ຖືຮຸ້ນສາມາດລົງຄະແນນສຽງແບບອອນລາຍໄດ້.

<u>ບໍລິສັດ ຂໍສະຫງວນສິດ ໃນການອະນຸຍາດໃຫ້ສະເພາະຜູ້ທີ່ມີເອກະສານຖືກຕ້ອງ ແລະ ຄົບຖ້ວນເທົ່ານັ້ນ ຈຶ່ງສາມາດເຂົ້າຮ່ວມກອງປະຊຸມທາງອອນລາຍໄດ້. ເຊິ່ງເອກະສານທີ່ຕ້ອງ ຄັດຕິດສົ່ງເຂົ້າມາໃນລະບົບມີດັ່ງນີ້:</u>

1. ການລົງທະບຽນ ເຂົ້າຮ່ວມປະຊຸມສາມັນຜູ້ຖືຮຸ້ນຜ່ານລະບົບອອນລາຍ AGM.

ບໍລິສັດຈະເລີ່ມເປີດຮັບລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2022 ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ທາງອອນລາຍ ນັບແຕ່ມື້ສົ່ງແຈ້ງເຊີນຜ່ານອີເມວຂອງຜູ້ຖືຮຸ້ນ ເຖິງວັນທີ 21/04/2023 ໂດຍຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມທາງອອນລາຍຕ້ອງແຈ້ງຈຸດປະສົງເຂົ້າຮ່ວມ ຜ່ານລະບົບ AGM ຄື: https://agm-egm.edlgen.com.la/user/login, ລາຍລະອຽດຕ່າງໆແມ່ນແນບຜ່ານອີເມວ ເຊິ່ງຜູ້ຖືຮຸ້ນຈະໄດ້ຮັບຂໍ້ມູນດັ່ງນີ້:

1) ລິ້ງທີ່ຢູ່ເວັບໄຊສຳລັບການເຂົ້າສູ່ລະບົບ AGM ເພື່ອລົງທະບຽນ ແລະ ລົງຄະແນນສຽງ.
2) ຂໍ້ມູນເລກບັດປະຈຳຕົວ ຫຼື ເລກໜັງສືຜ່ານແດນ ທີ່ໃຊ້ເປັນ ຊື່ຜູ້ໃຊ້ງານ ສຳລັບເຂົ້າສູ່ລະບົບ AGM.
   ພາຍຫຼັງ ກົດລິ້ງ https://agm-egm.edlgen.com.la/user/login ເຂົ້າສູ່ລະບົບຄັ້ງທຳອິດ ຜູ້ຖືຮຸ້ນຈຳເປັນຕ້ອງໄດ້ກົດ "ລືມລະຫັດຜ່ານ" ເພື່ອດຳເນີນຕັ້ງຄ່າ ລະຫັດຜ່ານໃຫມ່ ໂດຍທີ່ ລະບົບຈະສົ່ງຂໍ້ຄວາມໄປທີ່ອີເມວ ຂອງທ່ານທັນທີ.
3) ເມື່ອເຂົ້າສູ່ລະບົບ ການຕອບຮັບເຂົ້າຮ່ວມປະຊຸມ ຈະມີ 3 ທາງເລືອກເຊັ່ນ:
   3.1. "ຕ້ອງການເຂົ້າຮ່ວມປະຊຸມ ມາດ້ວຍຕົນເອງ (Individual)" ໝາຍເຖິງ ຜູ້ຖືຮຸ້ນແຈ້ງຈຸດປະສົງລົງທະບຽນລ່ວງໜ້າຜ່ານທາງອອນລາຍ ແຕ່ເຂົ້າຮ່ວມງານປະຊຸມຊ້ອງໜ້າ.
   3.2. "ຕ້ອງການເຂົ້າຮ່ວມກອງປະຊຸມ ໂດຍການມອບສັນທະ (Proxy)" ໝາຍເຖິງ ຜູ້ຖືຮຸ້ນແຈ້ງຈຸດປະສົງລົງທະບຽນລ່ວງໜ້າຜ່ານທາງອອນລາຍ ແລະ ມອບສັນທະ, ເຊິ່ງມີລາຍລະອຽດດັ່ງນີ້:
   - ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງມະຕິແທນຜູ້ຖືຮຸ້ນໄດ້ທຸກປະການຕາມທີ່ເຫັນສົມຄວນ (ກໍລະນີທີ່ມອບໃຫ້ ກຳມະການອິດສະຫຼະ ເທົ່ານັ້ນ).
   - ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ.
   3.3. "ຕ້ອງການເຂົ້າຮ່ວມປະຊຸມ ດ້ວຍຕົນເອງ ແບບອອນລາຍ" ໝາຍເຖິງ ຜູ້ຖືຮຸ້ນແຈ້ງຈຸດປະສົງລົງທະບຽນລ່ວງໜ້າຜ່ານທາງອອນລາຍ ແລະ ເຂົ້າຮ່ວມງານປະຊຸມຜ່ານທາງ Microsoft Team ແລະ ໂຫວດຄະແນນສຽງຜ່ານລະບົບ AGM.

2. ເອກະສານ ແລະ ຫຼັກຖານ (ທີ່ຍັງບໍ່ໝົດອາຍຸ) ທີ່ຜູ້ຖືຮຸ້ນ ຈະຕ້ອງສຳເນົາ ເພື່ອນຳເຂົ້າລະບົບ AGM ເພື່ອໃຊ້ໃນການຢັ້ງຢືນຕົວຕົນ ໃນການເຂົ້າຮ່ວມກອງປະຊຸມອອນລາຍ

- ເອກະສານທີ່ໃຊ້ເພື່ອຢັ້ງຢືນຕົວຕົນເຊັ່ນ: ບັດປະຈຳຕົວ, ບັດໜັງສືຜ່ານແດນ(ສຳລັບຄົນຕ່າງປະເທດ) ແລະ ເອກະສານອື່ນໆທີ່ກ່ຽວກັບເອກະສານຢັ້ງຢືນຕົວຕົນ ຕ້ອງເປັນຟາຍຮູບພາບ ນາມສະກຸນ JPG ຫຼື JPEG.
- ເອກະສານໃບມອບສັນທະ ແລະ ເອກະສານສຳຄັນຕ່າງໆ ຕ້ອງເປັນຟາຍນາມສະກຸນ PDF.

2.1 <u>ຜູ້ຖືຮຸ້ນທີ່ເປັນບຸກຄົນ</u>

2.1.1 ກໍລະນີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມອອນລາຍດ້ວຍຕົນເອງ

(1) ໃຫ້ສຳເນົາເອກະສານທີ່ທາງພາກລັດອອກໃຫ້ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນທີ່ເປັນຄົນຕ່າງປະເທດ) ໃນຮູບແບບຟາຍ JPG ຫຼື JPEG (ຮູບພາບ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ, ໃນກໍລະນີດັ່ງກ່າວ ເຈົ້າໜ້າທີ່ລົງທະບຽນຈະແຈ້ງອີເມວເຖິງຜູ້ຖືຮຸ້ນ ໃຫ້ຮັບຊາບ, ເພື່ອຍື່ນຫຼັກຖານເພີ່ມຕື່ມຜ່ານລະບົບ AGM ຫຼື ອີເມວກໍ່ໄດ້.

2.1.2 ກໍລະນີຜູ້ຖືຮຸ້ນມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນໃຫ້ສຳເນົາເອກະສານ ດັ່ງລຸ່ມນີ້ :

(1) ໃບມອບສັນທະ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ຊຶ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງໂດຍຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ. ຕ້ອງສຳເນົາເອກະສານໃນຮູບແບບຟາຍ PDF.

(2) ສຳເນົາເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຖືຮຸ້ນທີ່ມອບໝາຍ ຕາມຂໍ້ 2.1.1 ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຜູ້ຖືຮຸ້ນທີ່ມອບໝາຍໃນຮູບແບບຟາຍ PDF.

- **ເອກະສານ 2 ຂໍ້ຂ້າງເທິງນີ້ ຕ້ອງເປັນຟາຍ ນາມສະກຸນ PDF (ລວມເອກະສານໃນຟາຍດຽວ).**

(3) ເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຕາງໜ້າທີ່ເປັນຄົນຕ່າງປະເທດ) ແມ່ນໃຫ້ສຳເນົາເອກະສານໃນຮູບແບບນາມສະກຸນ JPG ຫຼື JPEG ແລະ ກໍລະນີ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ,

(4) ໃນກໍລະນີເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ເຈົ້າໜ້າທີ່ລົງທະບຽນຈະແຈ້ງອີເມວເຖິງຕົວແທນ ແລະ/ຫຼື ຜູ້ຖືຮຸ້ນ ໃຫ້ຮັບຊາບ, ເພື່ອຍື່ນຫຼັກຖານເພີ່ມຕື່ມຜ່ານລະບົບ AGM ຫຼື ສົ່ງໂດຍກົງຜ່ານອີເມວກ່ຳໄດ້.

2.2 ຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນ

2.2.1 ກໍລະນີຕົວແທນຂອງຜູ້ຖືຮຸ້ນ (ຜູ້ອຳນວຍການ) ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງ ໃຫ້ສະແກນເອກະສານດັ່ງລຸ່ມນີ້:

(1) ເອກະສານທີ່ທາງພາກລັດອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ທີ່ເປັນຄົນຕ່າງປະເທດ) ອັບໂຫລດເອກະສານໃນຮູບແບບຟາຍ JPG ຫຼື JPEG (ຮູບພາບ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ,

(2) ສະແກນໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກິດລະບຽບບໍລິສັດ ແລະ ໃບທະບຽນອາກອນ (ປີສຸດທ້າຍ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວ ທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າ ຕົວແທນຂອງນິຕິບຸກຄົນທີ່ເຂົ້າຮ່ວມກອງປະຊຸມ ມີອຳນາດດຳເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງ ໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ),ໃຫ້ສຳເນົາເອກະສານ ໃນຮູບແບບຟາຍ JPG ຫຼື JPEG (ຮູບພາບ) ເຂົ້າສູ່ລະບົບ AGM ເພື່ອຢືນຢັນຕົວຕົນ.

(3) ໃນກໍລະນີເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ເຈົ້າໜ້າທີ່ລົງທະບຽນຈະແຈ້ງອີເມວເຖິງຕົວແທນ ແລະ/ຫຼື ຜູ້ຖືຮຸ້ນ ໃຫ້ຮັບຊາບ, ເພື່ອຍື່ນຫຼັກຖານເພີ່ມຕື່ມຜ່ານລະບົບ AGM ຫຼື ສົ່ງໂດຍກົງຜ່ານອີເມວກ່ຳໄດ້.

2.2.2 ກໍລະນີຜູ້ຖືຮຸ້ນມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນ ໃຫ້ສະແກນເອກະສານດັ່ງລຸ່ມນີ້:

(1) ໃບມອບສັນທະ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ຊຶ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງໂດຍຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ ໃຫ້ສຳເນົາເອກະສານເປັນຟາຍດຽວ ເພື່ອສົ່ງເອກະສານ ໃນຮູບແບບຟາຍ (PDF) ເຂົ້າສູ່ລະບົບ AGM.

(2) ສະແກນໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກິດລະບຽບບໍລິສັດ ແລະ ໃບທະບຽນອາກອນ (ປີສຸດທ້າຍ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວ ທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າ ຕົວແທນຂອງນິຕິບຸກຄົນມີອຳນາດດຳເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ໃຫ້ສະແກນເອກະສານ ໃນຮູບແບບຟາຍ (PDF) ເຂົ້າສູ່ລະບົບ AGM ເພື່ອຢືນຢັນຕົວຕົນ.

(3) ສະແກນເອກະສານທີ່ທາງພາກລັດອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ຕາມຂໍ້ 2.2.1 (1) ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ໃຫ້ສະແກນເອກະສານ ໃນຮູບແບບຟາຍ (PDF).

- **ເອກະສານ 3 ຂໍ້ຂ້າງເທິງນີ້ ຕ້ອງເປັນຟາຍ ນາມສະກຸນ PDF (ລວມເອກະສານໃນຟາຍດຽວ).**

(4) ເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຕາງໜ້າທີ່ເປັນຄົນຕ່າງປະເທດ) ແມ່ນໃຫ້ອັບໂຫຼດເອກະສານໃນຮູບແບບນາມສະກຸນ JPG ຫຼື JPEG ແລະ ກໍລະນີ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ,

(5) ໃນກໍລະນີເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ເຈົ້າໜ້າທີ່ລົງທະບຽນຈະແຈ້ງອີເມວເຖິງຕົວແທນ ແລະ/ຫຼື ຜູ້ຖືຮຸ້ນ ໃຫ້ຮັບຊາບ, ເພື່ອຍື່ນຫຼັກຖານເພີ່ມຕື່ມຜ່ານລະບົບ AGM ຫຼື ສົ່ງໂດຍກົງຜ່ານອີເມວກໍ່ໄດ້.

2.2.3 ກໍລະນີຜູ້ຖືຮຸ້ນເປັນນິຕິບຸກຄົນຕ່າງປະເທດ

(1) ໃຫ້ປະຕິບັດຕາມຂໍ້ 2.2.1 ຫຼື 2.2.2 ແລ້ວແຕ່ກໍລະນີ.

(2) ເອກະສານຂອງນິຕິບຸກຄົນຕ່າງປະເທດຕ້ອງໄດ້ແປເປັນພາສາລາວ ຫຼື ພາສາອັງກິດ ແລະ ໃຫ້ຕົວແທນຂອງນິຕິບຸກຄົນດັ່ງກ່າວລົງລາຍເຊັນຮັບຮອງສະບັບແປເປັນພາສາດັ່ງກ່າວ.

3. ການມອບໝາຍເອກະສານ.

ຜູ້ຖືຮຸ້ນທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດໄດ້ດ້ວຍຕົນເອງ ສາມາດມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນໄດ້ ໂດຍດຳເນີນການດັ່ງນີ້:

3.1 ມອບໝາຍໃຫ້ຜູ້ໃດໜຶ່ງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຫຼື ເລືອກມອບສິດໃຫ້ກຳມະການອິດສະຫຼະຂອງບໍລິສັດຜູ້ໃດໜຶ່ງ ໂດຍໃຫ້ລະບຸຊື່ພ້ອມລາຍລະອຽດຂອງບຸກຄົນທີ່ຜູ້ຖືຮຸ້ນຕ້ອງການຈະມອບໝາຍ ຫຼື ກາເຄື່ອງໝາຍ (✓) ລົງໃນຊ່ອງ □ ໜ້າຊື່ກຳມະການອິດສະຫຼະ ຕາມທີ່ລະບຸໄວ້ໃນໃບມອບສັນທະ ໂດຍເລືອກພຽງຜູ້ດຽວໃຫ້ເປັນຜູ້ຮັບມອບໝາຍໃນການເຂົ້າຮ່ວມກອງປະຊຸມດັ່ງກ່າວ.

- ໃຫ້ສະແກນເອກະສານ ໃບມອບສັນທະ ໃນຮູບແບບຟາຍ (PDF) ເພື່ອສົ່ງເຂົ້າລະບົບ AGM ພາຍໃນວັນທີ 21 ເມສາ 2023 ເພື່ອໃຫ້ເຈົ້າໜ້າທີ່ຂອງບໍລິສັດໄດ້ມີເວລາກວດກາເອກະສານ.

ໃນນີ້, ຜູ້ຖືຮຸ້ນບໍ່ສາມາດແບ່ງແຍກຈຳນວນຮຸ້ນໂດຍມອບໝາຍໃຫ້ຜູ້ຕາງໜ້າຫຼາຍຄົນ ເພື່ອແບ່ງການລົງຄະແນນສຽງໄດ້ ແລະ ຜູ້ຖືຮຸ້ນຈະຕ້ອງມອບໝາຍເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນ ໂດຍບໍ່ສາມາດມອບໝາຍພຽງບາງສ່ວນໜ້ອຍກວ່າຈຳນວນທີ່ຕົນຖືຢູ່ໄດ້.

4. ການແຈ້ງຕອບ ຈາກລະບົບ AGM ແລະ ຮັບລິ້ງປະຊຸມອອນລາຍຜ່ານ Microsoft Teams.

- ກໍລະນີ ຜ່ານການອະນຸມັດ ຈາກເຈົ້າໜ້າທີ່ລົງທະບຽນ, ລະບົບຈະແຈ້ງ ຜົນສະຖານະ ແລະ ແຈ້ງລິ້ງເຂົ້າຮ່ວມປະຊຸມຜ່ານ Microsoft Teams ໃນລະບົບບັນຊີຜູ້ໃຊ້ງານ AGM.

- ກໍລະນີ ບໍ່ຜ່ານການອະນຸມັດ ຈາກເຈົ້າໜ້າທີ່ລົງທະບຽນ, ລະບົບຈະແຈ້ງຜ່ານອີເມວຂອງຜູ້ຖືຮຸ້ນ ແລະ/ຫຼື ອີເມວຂອງຜູ້ຕາງໜ້າ.
- ອີເມວເຈົ້າໜ້າທີ່ລົງທະບຽນຈະສົ່ງຫາຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ຈະຕ້ອງດຳເນີນການດ້ານເອກະສານໃຫ້ສຳເລັດ ຕາມໄລຍະເວລາທີ່ກຳນົດ, ອີເມວສຳລັບການແຈ້ງກໍລະນີເອກະສານບໍ່ຜ່ານການອະນຸມັດ ຊຶ່ທີ່ຢູ່ອີເມວ: agm-egm@edlgen.com.la ສຳລັບຜູ້ຖືຮຸ້ນລົງທະບຽນເຂົ້າຮ່ວມດ້ວຍໂຕເອງແບບອອນລາຍ, ແລະ proxy-register@edlgen.com.la ສຳລັບການລົງທະບຽນແບບແຕ່ງຕັ້ງມອບໝາຍຜູ້ຕາງໜ້າເຂົ້າປະຊຸມແທນ.

5. ການລົງຄະແນນສຽງໃນກອງປະຊຸມສາມັນຜູ້ຖືຮຸ້ນຜ່ານລະບົບອອນລາຍ AGM.

5.1 ຫຼັກການລົງຄະແນນສຽງ

(1) ໜຶ່ງຮຸ້ນເທົ່າກັບ ໜຶ່ງສຽງ ແລະ ຜູ້ຖືຮຸ້ນຈະຕ້ອງລົງຄະແນນສຽງເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນ.

(2) ເມື່ອຜູ້ຖືຮຸ້ນເຂົ້າສູ່ລະບົບເພື່ອລົງຄະແນນສຽງ ພາຍໃນລະບົບ ຈະມີ 2 ທາງເລືອກ ເພື່ອກົດລົງຄະແນນສຽງ ເຫັນດີ ຫຼື ບໍ່ເຫັນດີ, ຜູ້ຖືຮຸ້ນຈະເຫັນ ແລະ ສາມາດກົດເຂົ້າສູ່ວາລະ ເພື່ອລົງຄະແນນສຽງໄດ້ ກໍຕໍ່ເມື່ອ ວາລະນັ້ນເປີດໃຫ້ລົງຄະແນນສຽງຢູ່.

5.2 ວິທີປະຕິບັດໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມຜ່ານທາງອອນລາຍ

ໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ ເພື່ອບໍ່ໃຫ້ເປັນການເສຍເວລາຂອງຜູ້ຖືຮຸ້ນ, ປະທານໃນກອງປະຊຸມຈະຖາມວ່າ ມີຜູ້ໃດບໍ່ເຫັນດີ ຫຼື ບໍ່, ກຳນົດເວລາບໍ່ເກີນ 2 ນາທີ ໃນການລົງຄະແນນສຽງ, ຜູ້ທີ່ເຫັນດີຕ້ອງກົດເລືອກ ເຫັນດີ 

ສ່ວນຜູ້ທີ່ບໍ່ເຫັນດີກັບວາລະປະຊຸມດັ່ງກ່າວ ໃຫ້ກົດເລືອກ ບໍ່ເຫັນດີ 

ໃນໜ້າຕ່າງການລົງຄະແນນ ເພື່ອລະບົບຈະນຳໄປກວດນັບສະຫຼຸບຄະແນນສຽງ,

ຍົກເວັ້ນ: ສຳລັບຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນທີ່ມອບໝາຍໄດ້ລະບຸການລົງຄະແນນສຽງມາໃນໃບມອບສັນທະຢ່າງຈະແຈ້ງແລ້ວ ແລະ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງມະຕິແທນຜູ້ຖືຮຸ້ນໄດ້ທຸກປະການຕາມທີ່ເຫັນສົມຄວນ (ກໍລະນີທີ່ມອບໃຫ້ ກຳມະການອິດສະຫຼະ) ຈະບໍ່ສາມາດລົງຄະແນນສຽງແບບອອນລາຍໄດ້, ເນື່ອງຈາກ ເຈົ້າໜ້າທີ່ຮັບຜິດຊອບລົງຄະແນນສຽງ ໄດ້ທຳການລົງຄະແນນສຽງ ແລະ ບັນທຶກຄະແນນສຽງດັ່ງກ່າວຕາມທີ່ຕົວແທນໄດ້ນຳສົ່ງຝ່າຍເອກະສານມອບສັນທະ ເຂົ້າສູ່ລະບົບ AGM ກ່ອນໜ້ານີ້ແລ້ວ.

5.3 ການນັບຄະແນນສຽງ ແລະ ການແຈ້ງຜົນການນັບຄະແນນສຽງ.

ຜູ້ອຳນວຍການໃຫຍ່ຂອງບໍລິສັດ ຈະເປັນຜູ້ອະທິບາຍວິທີການນັບຄະແນນສຽງ ໃຫ້ກອງປະຊຸມຮັບຊາບ ກ່ອນເລີ່ມວາລະປະຊຸມ, ບໍລິສັດຈະນັບຄະແນນສຽງ ແລະ ແຈ້ງຜົນການນັບຄະແນນໃຫ້ກອງປະຊຸມຮັບຊາບກ່ອນສິ້ນສຸດໃນແຕ່ລະວາລະ, ຜູ້ຖືຮຸ້ນສາມາດຮັບຊົມການສະຫຼຸບ ແລະ ແຈ້ງຄະແນນສຽງຜ່ານກອງປະຊຸມອອນລາຍ ຜ່ານໂປຣແກຼມ Microsoft Teams.

ໃນນີ້, ບໍລິສັດ ຈະໃຊ້ວິທີຫັກຄະແນນສຽງທີ່ບໍ່ເຫັນດີອອກຈາກຈຳນວນສຽງທັງໝົດ ແລະ ສ່ວນທີ່ເຫຼືອຈະຖືເປັນຄະແນນສຽງທີ່ເຫັນດີ.

II. <u>ສຳລັບຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມແບບຊ້ອງໜ້າ</u>

ເພື່ອຄວາມສະດວກໃນການລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2022 ຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ຈະມາເຂົ້າຮ່ວມກອງປະຊຸມ ກະລຸນານຳໜັງສືເຊີນປະຊຸມ, ໃບແຈ້ງສິດ ແລະ ໃບມອບສັນທະມາພ້ອມ.

<u>ບໍລິສັດ ຂໍສະຫງວນສິດ ໃນການອະນຸຍາດໃຫ້ສະເພາະຜູ້ທີ່ມີເອກະສານຖືກຕ້ອງ ແລະ ຄົບຖ້ວນເທົ່ານັ້ນ ຈຶ່ງສາມາດເຂົ້າຮ່ວມກອງປະຊຸມໄດ້.</u>

1. ເອກະສານ ແລະ ຫຼັກຖານ (ທີ່ຍັງບໍ່ໝົດອາຍຸ) ທີ່ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ຈະຕ້ອງໃຊ້ໃນການສະເໜີໂຕ ໃນການເຂົ້າຮ່ວມກອງປະຊຸມ

1.1 <u>ຜູ້ຖືຮຸ້ນທີ່ເປັນບຸກຄົນ</u>

1.1.1 ກໍລະນີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມດ້ວຍຕົນເອງ
ໃຫ້ສະແດງເອກະສານທີ່ທາງພາກລັດອອກໃຫ້ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນທີ່ເປັນຄົນຕ່າງປະເທດ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

1.1.2 ກໍລະນີຜູ້ຖືຮຸ້ນມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນ ໃຫ້ແຈ້ງເອກະສານດັ່ງລຸ່ມນີ້:

(1) ໃບມອບສັນທະ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ຊຶ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງໂດຍຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ.

(2) ສຳເນົາເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຖືຮຸ້ນທີ່ມອບໝາຍ ຕາມຂໍ້ 1.1.1 ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຜູ້ຖືຮຸ້ນທີ່ມອບໝາຍ.

(3) ເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຕາງໜ້າທີ່ເປັນຄົນຕ່າງປະເທດ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

1.2 <u>ຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນ</u>

1.2.1 ກໍລະນີຕົວແທນຂອງຜູ້ຖືຮຸ້ນ (ຜູ້ອຳນວຍການ) ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງ ໃຫ້ແຈ້ງເອກະສານດັ່ງລຸ່ມນີ້:

(1) ເອກະສານທີ່ທາງພາກລັດອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ທີ່ເປັນຄົນຕ່າງປະເທດ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

(2) ສຳເນົາໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກົດລະບຽບບໍລິສັດ ແລະ ໃບທະບຽນອາກອນ (ປີສຸດທ້າຍ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວ ທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າ ຕົວແທນຂອງນິຕິບຸກຄົນທີ່ເຂົ້າຮ່ວມກອງປະຊຸມ ມີອຳນາດດຳເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງ ໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ).

1.2.2 ກໍລະນີຜູ້ຖືຮຸ້ນມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນ ໃຫ້ແຈ້ງເອກະສານດັ່ງລຸ່ມນີ້:

(1) ໃບມອບສັນທະ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ຊຶ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງໂດຍຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ.

(2) ສຳເນົາໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກິດລະບຽບບໍລິສັດ ແລະ ໃບທະບຽນອາກອນ (ປີສຸດທ້າຍ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວ ທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າ ຕົວແທນຂອງນິຕິບຸກຄົນມີອຳນາດດຳເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ).

(3) ສຳເນົາເອກະສານທີ່ທາງພາກລັດອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ຕາມຂໍ້1.2.1(1) ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ).

(4) ເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳ ລັບຜູ້ຕາງໜ້າທີ່ເປັນຄົນຕ່າງປະເທດ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

1.2.3 ກໍລະນີຜູ້ຖືຮຸ້ນເປັນນິຕິບຸກຄົນຕ່າງປະເທດ

(1) ໃຫ້ປະຕິບັດຕາມຂໍ້ 1.2.1 ຫຼື 1.2.2 ແລ້ວແຕ່ກໍລະນີ.

(2) ເອກະສານຂອງນິຕິບຸກຄົນຕ່າງປະເທດຕ້ອງໄດ້ແປເປັນພາສາລາວ ຫຼື ພາສາອັງກິດ ແລະ ໃຫ້ຕົວແທນຂອງນິຕິບຸກຄົນດັ່ງກ່າວລົງລາຍເຊັນຮັບຮອງສະບັບແປເປັນພາສາດັ່ງກ່າວ.

2. ການມອບໝາຍ

ຜູ້ຖືຮຸ້ນທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດໄດ້ດ້ວຍຕົນເອງ ສາມາດມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນໄດ້ ໂດຍດຳເນີນການດັ່ງນີ້:

2.1 ມອບໝາຍໃຫ້ຜູ້ໃດໜຶ່ງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຫຼື ເລືອກມອບສິດໃຫ້ກຳມະການອິດສະຫຼະຂອງບໍລິສັດຜູ້ໃດໜຶ່ງ ໂດຍໃຫ້ລະບຸຊື່ພ້ອມລາຍລະອຽດຂອງບຸກຄົນທີ່ຜູ້ຖືຮຸ້ນຕ້ອງການຈະມອບໝາຍ ຫຼື ການເຄື່ອງໝາຍ (✓) ລົງໃນຊ່ອງ □ ໜ້າຊື່ກຳມະການອິດສະຫຼະ ຕາມທີ່ລະບຸໄວ້ໃນໃບມອບສັນທະ ໂດຍເລືອກພຽງຜູ້ດຽວໃຫ້ເປັນຜູ້ຮັບມອບໝາຍໃນການເຂົ້າຮ່ວມກອງປະຊຸມດັ່ງກ່າວ.

2.2 ນຳສົ່ງໃບມອບສັນທະຄືນ ພະແນກເລຂານຸການບໍລິສັດ ພາຍໃນວັນທີ **25 ເມສາ 2023** ກ່ອນເວລາເປີດກອງປະຊຸມຢ່າງໜ້ອຍໜຶ່ງຊົ່ວໂມງ (14:00 ໂມງ) ເພື່ອໃຫ້ເຈົ້າໜ້າທີ່ຂອງບໍລິສັດໄດ້ມີເວລາກວດກາເອກະສານ ເພື່ອໃຫ້ທັນເວລາເປີດກອງປະຊຸມ.

ໃນນີ້, ຜູ້ຖືຮຸ້ນບໍ່ສາມາດແບ່ງແຍກຈຳນວນຮຸ້ນໂດຍມອບໝາຍໃຫ້ຜູ້ຕາງໜ້າຫຼາຍຄົນ ເພື່ອແບ່ງການລົງຄະແນນສຽງໄດ້ ແລະຜູ້ຖືຮຸ້ນຈະຕ້ອງມອບໝາຍເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນ ໂດຍບໍ່ສາມາດມອບໝາຍພຽງບາງສ່ວນໜ້ອຍກວ່າຈຳນວນທີ່ຕົນຖືຢູ່ໄດ້.

3. ການລົງທະບຽນ

ບໍລິສັດຈະເລີ້ມເປີດຮັບລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2022 ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ກ່ອນເປີດກອງປະຊຸມ 01 ຊົ່ວໂມງ 30 ນາທີ ຫຼື ຕັ້ງແຕ່ເວລາ 13:30-15:00 ໂມງ ເປັນຕົ້ນໄປ ໃນວັນທີ **25 ເມສາ 2023** ທີ່ຫ້ອງປະຊຸມຊັ້ນ 1 ອາຄານສຳນັກງານລັດວິສາຫະກິດໄຟຟ້າລາວ ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫລວງວຽງຈັນ ຕາມແຜນທີ່ຄັດຕິດມາພ້ອມນີ້.

ໃນນີ້, ໃນແຕ່ລະວາລະປະຊຸມ ກ່ອນເລີ້ມການລົງຄະແນນ ບໍລິສັດຈະປິດຮັບລົງທະບຽນເປັນການຊົ່ວຄາວ ແລະ ຈະເປີດຮັບລົງທະບຽນອີກເມື່ອການນັບຄະແນນຂອງແຕ່ລະວາລະປະຊຸມສຳເລັດ.

4. ການລົງຄະແນນສຽງໃນກອງປະຊຸມສາມັນຜູ້ຖືຮຸ້ນ

4.1 <u>ຫຼັກການລົງຄະແນນສຽງ</u>

(1) ໜຶ່ງຮຸ້ນເທົ່າກັບ ໜຶ່ງສຽງ ແລະຜູ້ຖືຮຸ້ນຈະຕ້ອງລົງຄະແນນສຽງເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນ.

(2) ບໍລິສັດຈະຈັດໃຫ້ມີບັດລົງຄະແນນ (Ballots) ສຳຫຼັບທຸກໆ ວາລະປະຊຸມ ທີ່ຕ້ອງມີການລົງຄະແນນສຽງ ໂດຍບໍລິສັດຈະແຈກບັດລົງຄະແນນໃຫ້ຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າທຸກຄົນ ໃນເວລາທີ່ລົງທະບຽນ, **<u>ຍົກເວັ້ນ</u>** ສຳລັບຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນທີ່ມອບໝາຍໄດ້ລະບຸການລົງຄະແນນສຽງມາໃນໃບມອບສັນທະຢ່າງຈະແຈ້ງແລ້ວ ບໍລິສັດຈະບໍ່ແຈກບັດລົງຄະແນນໃຫ້ແກ່ຜູ້ຕາງໜ້າດັ່ງກ່າວ, ໃນນີ້ ຜູ້ທີ່ມາລົງທະບຽນຫຼັງຈາກເວລາທີ່ກອງປະຊຸມຜູ້ຖືຮຸ້ນໄດ້ເປີດກອງປະຊຸມ ໄປຕາມລະບຽບວາລະປະຊຸມບາງສ່ວນແລ້ວ, ຈະໄດ້ຮັບບັດລົງຄະ ແນນສະເພາະວາລະປະຊຸມທີ່ເຫຼືອຢູ່ເທົ່ານັ້ນ.

4.2 <u>ວິທີປະຕິບັດໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ</u>

ໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ ເພື່ອບໍ່ໃຫ້ເປັນການເສຍເວລາຂອງຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າທັງໝົດ, ປະທານໃນກອງປະຊຸມຈະຖາມວ່າ ມີຜູ້ໃດບໍ່ເຫັນດີ ຫຼືບໍ່ ຜູ້ທີ່ເຫັນດີບໍ່ຕ້ອງກາເຄື່ອງໝາຍໃດໆ ລົງໃນບັດລົງຄະແນນ (Ballots) ສ່ວນຜູ້ທີ່ບໍ່ເຫັນດີກັບວາລະປະຊຸມດັ່ງກ່າວ ໃຫ້ກາເຄື່ອງໝາຍ (✓) ລົງໃນຊ່ອງ □ ບໍ່ເຫັນດີ ໃນບັດລົງຄະແນນ ພ້ອມລົງລາຍເຊັນໃນບັດລົງຄະແນນ ແລະ ຍົກມືຂຶ້ນ ເພື່ອສົ່ງມອບໃຫ້ແກ່ເຈົ້າໜ້າທີ່ຂອງບໍລິສັດ ເພື່ອນຳໄປກວດນັບ, <u>ຍົກເວັ້ນ</u> ສຳລັບຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນທີ່ມອບໝາຍໄດ້ລະບຸການລົງຄະແນນສຽງມາໃນໃບມອບສັນທະຢ່າງຈະແຈ້ງແລ້ວ ບໍລິສັດຈະບັນທຶກຄະແນນສຽງດັ່ງກ່າວຕັ້ງແຕ່ເວລາທີ່ຜູ້ຕາງໜ້າລົງທະບຽນເຂົ້າຮ່ວມກອງປະຊຸມ.

ໃນນີ້, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ສົ່ງບັດລົງຄະແນນບໍ່ເຫັນດີ ພາຍຫຼັງຈາກທີ່ປະທານໄດ້ປະກາດໃຫ້ກອງປະຊຸມຊາບຜົນການລົງຄະແນນສຽງ ໃນແຕ່ລະວາລະປະຊຸມສິ້ນສຸດລົງແລ້ວ, ບໍລິສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວມາລວມ ເປັນຄະແນນສຽງອີກ.

4.3 <u>ການນັບຄະແນນສຽງ ແລະ ການແຈ້ງຜົນການນັບຄະແນນ</u>

ຜູ້ອຳນວຍການໃຫຍ່ຂອງບໍລິສັດ ຈະເປັນຜູ້ອະທິບາຍວິທີການນັບຄະແນນສຽງ ໃຫ້ກອງປະຊຸມຮັບຊາບ ກ່ອນເລີ້ມວາລະປະຊຸມ ໂດຍບໍລິສັດຈະນັບຄະແນນສຽງ ແລະ ແຈ້ງຜົນການນັບຄະແນນໃຫ້ກອງປະຊຸມຮັບຊາບກ່ອນສິ້ນສຸດການປະຊຸມໃນແຕ່ລະວາລະ.

ໃນນີ້, ບໍລິສັດ ຈະໃຊ້ວິທີຫັກຄະແນນສຽງທີ່ບໍ່ເຫັນດີອອກຈາກຈຳນວນສຽງທັງໝົດ ແລະ ສ່ວນທີ່ເຫຼືອຈະຖືເປັນຄະແນນສຽງທີ່ເຫັນດີ.

ຂັ້ນຕອນເຂົ້າລະບົບກອງປະຊຸມສາມັນຜູ້ຖືຮຸ້ນ ຜ-ຟຟລ ປະຈຳປີ 2022 ຜ່ານລະບົບອອນລາຍ

ຜູ້ຖືຮຸ້ນທີ່ມີຈຸດປະສົງເຂົ້າປະຊຸມຜ່ານລະບົບອອນລາຍ ສາມາດປະຕິບັດຕາມຂັ້ນຕອນດັ່ງນີ້:

1. ບໍລິສັດ ຈະສົ່ງ E-mail ແຈ້ງເຊີນປະຊຸມ ແລະ ລາຍລະອຽດການເຂົ້າຮ່ວມປະຊຸມ ໄປຫາຜູ້ຖືຮຸ້ນປະກອບມີ:
   1) ລິ້ງສຳລັບເຂົ້າສູ່ລະບົບ AGM ເພື່ອລົງທະບຽນກອງປະຊຸມຜູ້ຖືຮຸ້ນ ແລະ ລົງຄະແນນສຽງຜ່ານອອນລາຍ.
   2) ຂໍ້ມູນເລກບັດປະຈຳຕົວ ຫຼື ເລກໜັງສືຜ່ານແດນ (ສຳລັບຄົນຕ່າງປະເທດ) ທີ່ໃຊ້ເປັນ ຊື່ຜູ້ໃຊ້ງານ ສຳລັບ ເຂົ້າສູ່ລະບົບ AGM.
   3) File ບັດເຊີນທີ່ຄັດຕິດເພື່ອເປັນຂໍ້ມູນ.
      - ຊື່ອີເມວ ຂອງບໍລິສັດ ຜ-ຟຟລ ທີ່ແຈ້ງເຊີນເຖິງຜູ້ຖືຮຸ້ນ ແມ່ນ: agm-egm@edlgen.com.la.

2. ສຳລັບຜູ້ຖືຮຸ້ນທີ່ມີຈຸດປະສົງເຂົ້າຮ່ວມກອງປະຊຸມຜ່ານລະບົບອອນລາຍ ລະບົບລົງທະບຽນອອນລາຍ ຈະເປີດໃຫ້ດຳເນີນການ **ຕັ້ງແຕ່ວັນທີຜູ້ຖືຮຸ້ນໄດ້ຮັບບັດເຊີນ ໂດຍລະບົບຈະປິດຮັບ ການລົງທະບຽນອອນລາຍ ໃນວັນທີ 21/04/2023 ເວລາ 17:00 ໂມງ.**
3. ທ່ານສາມາດ ສະແກນ QR Code ແລະ ນຳໃຊ້ Short link ເພື່ອດາວໂຫລດຄູ່ມືການຕິດຕັ້ງ ໂປຣແກຣມ Microsoft Team ແລະ ຂັ້ນຕອນການໃຊ້ງານລະບົບ ກອງປະຊຸມສາມັນຜູ້ຖືຮຸ້ນ ຜ-ຟຟລ ປະຈຳປີ 2022 ຜ່ານລະບົບອອນລາຍ AGM ເພື່ອສຶກສາກ່ຽວກັບລະບົບ ແລະ ປະຕິບັດຕາມແຕ່ລະຂັ້ນຕອນ.

Short link: shorturl.at/ixyDJ

ໝາຍເຫດ:

1. ຜູ້ຖືຮຸ້ນຕ້ອງນຳເອົາ ຂໍ້ມູນເລກບັດປະຈຳຕົວ ຫຼື ເລກໜັງສືຜ່ານແດນ (ສຳລັບຄົນຕ່າງປະເທດ) ທີ່ໄດ້ຮັບຈາກ E-mail ເພື່ອໃຊ້ເປັນ ຊື່ຜູ້ໃຊ້ງານ ເຂົ້າສູ່ລະບົບ AGM, ເພື່ອແຈ້ງຈຸດປະສົງການເຂົ້າຮ່ວມຜ່ານອອນລາຍ, ເມື່ອເອກະສານຢັ້ງຢືນຕົວຕົນ ແລະ ເອກະສານສຳຄັນຕ່າງໆຂອງຜູ້ຖືຮຸ້ນ ຜ່ານການອະນຸມັດໃນຂັ້ນຕອນນີ້ຈະນັບເປັນອົງປະຊຸມໃຫ້ (ຖ້າຫາກຜູ້ຖືຮຸ້ນບໍ່ດຳເນີນການລົງທະບຽນ/ຢືນຢັນຕົວຕົນໃຫ້ສຳເລັດ, ກໍລະນີທີ່ເອກະສານບໍ່ຜ່ານການອະນຸມັດ ຈາກເຈົ້າໜ້າທີ່ ການເຂົ້າຮ່ວມກອງປະຊຸມ ລະບົບຈະບໍ່ນັບເປັນອົງປະຊຸມ ແລະ ບໍ່ສາມາດໂຫວດຄະແນນຜ່ານອອນລາຍໄດ້ ລວມເຖິງຈະບໍ່ສາມາດຮັບຊົມການຖ່າຍທອດສົດຂອງກອງປະຊຸມໄດ້), ກໍລະນີເຂົ້າຮ່ວມໂຫວດອອນລາຍ ຖ້າຫາກຜູ້ຖືຮຸ້ນກົດປຸ່ມ “ອອກຈາກການປະຊຸມ ຫຼື ອອກຈາກລະບົບໂຫວດຄະແນນສຽງ” ລະຫວ່າງການດຳເນີນກອງປະຊຸມ ລະບົບຈະຕັດຄະແນນສຽງ ອອກຈາກອົງປະຊຸມ.
2. ຜູ້ຖືຮຸ້ນຕ້ອງມີ E-mail ເພື່ອຮັບຂໍ້ມູນແຈ້ງເຊີນເຂົ້າຮ່ວມລົງທະບຽນກອງປະຊຸມສາມັນຜູ້ຖືຮຸ້ນ ຜ-ຟຟລ ປະຈຳປີ 2022 ຜ່ານລະບົບອອນລາຍ.
3. ຂໍ້ມູນທີ່ປະກອບໃນລະບົບຕ້ອງກົງກັບຂໍ້ມູນ ໃນວັນ Record Date ຈາກຕະຫຼາດຫຼັກຊັບລາວ.
4. ກໍລະນີພົບບັນຫາໃນການໃຊ້ງານລະບົບປະຊຸມຜູ້ຖືຮຸ້ນຜ່ານລະບົບອອນລາຍ ຂອງ ຜ-ຟຟລ ສາມາດຕິດຕໍ່ໄດ້ທີ່ ເບີ ໂທ: 020 2221 0404, 020 5884 8144 (ໃຫ້ບໍລິການຈົນເຖິງ ວັນທີ 25 ເມສາ 2023 ເວລາ 8:30 - 17:00 ໂມງ).

ແຜນທີ່ ຂອງສະຖານທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2022

Map of the Meeting Place



ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2022

ທີ່ຫ້ອງປະຊຸມຊັ້ນ 1, ອາຄານສຳນັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ.

The Annual General Shareholder meeting for the year 2022, on 1st floor, Electricite du Laos heardquarter building.